ປຶ້ມຄູ່ມື
ການດຳເນີນຄະດີ
ການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ



ປີ 2023

ປຶ້ມຄູ່ມື
ການດຳເນີນຄະດີ
ການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ

ປຶ້ມຄູ່ມືຫົວນີ້ສ້າງຂຶ້ນ ພາຍໃຕ້ການຮ່ວມມື ແລະ ຊີ້ນຳໂດຍ ສານປະຊາຊົນສູງສຸດ, ໄດ້ຮັບການສະໜັບສະໜຸນຈາກ ລັດຖະບານອົດສະຕຣາລີ ຜ່ານແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT)

ປີ 2023

ຜູ້ຊີ້ນຳ:

ທ່ານ ບຸນຂວາງ ທະວິສັກ — ຮອງປະທານສານປະຊາຊົນສູງສຸດ

ຄະນະກວດແກ້:

1. ທ່ານ ບົວຄອງ ເພັງສີຫາພັດ — ຜູ້ພິພາກສາ ຊັ້ນສີ່ ສານປະຊາຊົນສູງສຸດ;
2. ທ່ານ ຄຳໄພ ໄຊຍະສຸກ — ຮອງຫົວໜ້າກົມຄຸ້ມຄອງວິຊາການ ແລະ ສະຖິຕິສານ;
3. ທ່ານ ນາງ ສີລິພອນ ສິດທິພັນ — ຜູ້ພິພາກສາ ຊັ້ນໜຶ່ງ ສານປະຊາຊົນສູງສຸດ.

ຄະນະຮັບຜິດຊອບຄົ້ນຄວ້າ ແລະ ຂຽນ:

1. ທ່ານ ອັກສອນສິນ ວິໄຊຍະໄລ — ຫົວໜ້າກົມຮ່ວມມືສາກົນ ສານປະຊາຊົນສູງສຸດ;
2. ທ່ານ ສີວັນ ບຸນທາລາ — ຜູ້ພິພາກສາ ຊັ້ນສາມ ສານປະຊາຊົນສູງສຸດ;
3. ທ່ານ ນາງ ນິພາພອນ ທອງມະນີວົງ — ຫົວໜ້າພະແນກກົມຄຸ້ມຄອງວິຊາການ ແລະ ສະຖິຕິສານ;
4. ທ່ານ ຈັນສຸກ ຄຳພູ — ຫົວໜ້າພະແນກສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ;
5. ທ່ານ ວຽງນະຄອນ ພິມມະສານ — ຜູ້ພິພາກສາ ຊັ້ນໜຶ່ງ ສານປະຊາຊົນສູງສຸດ;
6. ທ່ານ ສົມບູນ ສີປະເສີດ — ຜູ້ຊ່ວຍຜູ້ພິພາກສາສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ.

ຄຳນຳ

ປຶ້ມຄູ່ມືການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ໄດ້ສັງລວມ ເອົາບັນດາທິດສະດີ, ຫຼັກການດຳເນີນຄະດີ ຕາມກົດໝາຍຂອງ ສປປ ລາວ, ພ້ອມນັ້ນ ຍັງໄດ້ຄົ້ນຄວ້າ, ວິໄຈ ສົນທິສັນຍາ ແລະ ພາກປະຕິບັດສາກົນ ລວມທັງການຈັດຕັ້ງປະຕິບັດຕົວຈິງຢູ່ສານຂອງ ສປປ ລາວ, ພາຍຫຼັງຄະນະຮັບຜິດຊອບໄດ້ຮ່າງສຳເລັດໂດຍພື້ນຖານ ກໍໄດ້ຈັດກອງປະຊຸມປຶກສາຫາລື, ປະກອບຄຳຄິດ ຄຳເຫັນຮ່ວມກັບສະມາຊິກສະພາຜູ້ພິພາກສາ ແລະ ຊ່ຽວຊານຕ່າງປະເທດຫຼາຍຄັ້ງ ທັງເຊິ່ງໜ້າ ແລະ ລະບົບທາງໄກ, ຫຼັງຈາກນັ້ນ ຄະນະຮັບຜິດຊອບກໍໄດ້ຈັດກອງປະຊຸມ ເພື່ອຄົ້ນຄວ້າ, ຮຽບຮຽງ ແລະ ນຳເຂົ້າຜ່ານກອງປະຊຸມສະພາຜູ້ພິພາກສາ, ຊຶ່ງກອງປະຊຸມສະພາຜູ້ພິພາກສາ ໄດ້ເຫັນ ຄວາມສຳຄັນຈຶ່ງໄດ້ແນະນຳໃຫ້ປະສານສົມທົບ ແລະ ປຶກສາຫາລືກັບເຈົ້າໜ້າທີ່ຕຳຫຼວດ, ອົງການໄອຍະ ການປະຊາຊົນ, ກະຊວງຍຸຕິທຳ, ກະຊວງການຕ່າງປະເທດ ແລະ ສູນໃຫ້ຄຳປຶກສາປົກປ້ອງແມ່ຍິງ ແລະ ເດັກນ້ອຍ, ສູນກາງສະຫະພັນແມ່ຍິງລາວໃຫ້ລະອຽດກ່ອນສະເໜີຕໍ່ກອງປະຊຸມສະພາຜູ້ ພິພາກສາ.

ລັດຖະບານແຫ່ງ ສປປ ລາວ ໄດ້ຖືສຳຄັນ ແລະ ເອົາໃຈໃສ່ຕໍ່ວຽກງານສະກັດກັ້ນ ແລະ ການ ຕ້ານການຄ້າມະນຸດໂດຍໄດ້ວາງນະໂຍບາຍ, ສ້າງຕັ້ງຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ, ສ້າງ ແລະ ຮັບຮອງເອົາກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ, ສ້າງແຜນງານແຫ່ງຊາດວ່າດ້ວຍ ການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ແລະ ອື່ນໆ ເພື່ອເປັນແນວທາງໃນການຈັດຕັ້ງປະຕິບັດໃນ ແຕ່ລະວຽກງານ ໂດຍສະເພາະການດຳເນີນຄະດີການຄ້າມະນຸດ ທີ່ມີການພົວພັນຫຼາຍຝ່າຍ ທັງພາຍໃນ ແລະ ຕ່າງປະເທດ, ນອກຈາກ ຈະຕ້ອງປະຕິບັດຕາມກົດໝາຍຂອງ ສປປ ລາວ ກຳນົດໄວ້ຢ່າງເຂັ້ມ ງວດແລ້ວ ຍັງຕ້ອງຄຳນຶງເຖິງສົນທິສັນຍາ ແລະ ພາກປະຕິບັດສາກົນ ເປັນຕົ້ນ ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ທີ່ ສປປ ລາວ ໄດ້ເຂົ້າເປັນພາຄີ. ຜ່ານການດຳເນີນຄະດີການຄ້າ ມະນຸດຕົວຈິງຂອງສານປະຊາຊົນ ຍັງມີບາງດ້ານທີ່ມີຄວາມຫຍຸ້ງຍາກ ແລະ ປະຕິບັດບໍ່ເປັນເອກະພາບ

ຈຶ່ງມີຄວາມຈຳເປັນຕ້ອງໄດ້ສ້າງປຶ້ມຄູ່ມືກ່ຽວກັບການດຳເນີນຄະດີການຄ້າມະນຸດຢູ່ສານ ເພື່ອ ເປັນບ່ອນອີງ, ເປັນຄູ່ມືໃນການປະຕິບັດຢູ່ແຕ່ລະຂັ້ນຕອນການດຳເນີນ, ການພິຈາລະນາຕັດສິນ, ພິພາກສາຄະດີຂອງສານ. ໃນປີ 2018 ສານປະຊາຊົນສູງສຸດ ໄດ້ສ້າງຄູ່ມືການດຳເນີນຄະດີການຄ້າ ມະນຸດຢູ່ສານປະຊາຊົນສຳເລັດ ແລະ ໄດ້ຈັດຕັ້ງການເຜີຍແຜ່ ແລະ ຝຶກອົບຮົມໃຫ້ພະນັກງານສານ, ເຖິງຢ່າງໃດກໍຕາມ ການດຳເນີນຄະດີການຄ້າມະນຸດ ແມ່ນວຽກງານທີ່ລະອຽດອ່ອນ, ແຕະຕ້ອງເຖິງ ແນວຄິດ-ຈິດໃຈຂອງບຸກຄົນໂດຍກົງ ໂດຍສະເພາະຜູ້ຖືກເຄາະຮ້າຍທີ່ບັນດາປະເທດຕ່າງໆ ໄດ້ ເອົາໃຈໃສ່ ແລະ ກຳນົດເປັນຫຼັກການໄວ້ໃນສົນທິສັນຍາ ທີ່ປະເທດສະມາຊິກມີພັນທະຕ້ອງໄດ້ຜັນ ຂະຫຍາຍ ແລະ ປະຕິບັດຕໍ່ຜູ້ຖືກເຄາະຮ້າຍຢ່າງເໝາະສົມໃນທຸກຂັ້ນຕອນຂອງການດຳເນີນຄະດີ.

ປຶ້ມຄູ່ມືສະບັບນີ້ ໄດ້ຄົ້ນຄວ້າລົງເລິກກ່ຽວກັບການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍໃນເວລາດຳເນີນຄະດີຢູ່ສານ ເປັນຕົ້ນ ການເອົາຄຳໃຫ້ການ ຫຼື ການສຳພາດ, ການໄຕ່ສວນໃນທີ່ປະຊຸມສານ ລວມທັງ ການຄົ້ນຄວ້າພິຈາລະນາຕັດສິນຄະດີ ໂດຍອີງໃສ່ຫຼັກການດຳເນີນຄະດີຂອງ ສສປ ລາວ, ຫຼັກການສົນທິສັນຍາສາ ແລະ ພາກປະຕິບັດສາກົນ ທັງນີ້ ກໍເພື່ອບໍ່ໃຫ້ຜູ້ຖືກເຄາະຮ້າຍມີຜົນກະທົບຕໍ່ສະພາບຈິດໃຈ, ຄວາມອັບອາຍ, ກຽດສັກສີ, ການມີປົມດ້ອຍ, ການໄດ້ຮັບຄ່າເສຍຫາຍ, ຄ່າຊົດເຊີຍ ແລະ ອື່ນໆ.

ເຖິງແນວໃດກໍຕາມ, ປຶ້ມຄູ່ສະບັບນີ້ ກໍປາສະຈາກບໍ່ໄດ້ຂໍ້ຂາດຕົກບົກຜ່ອງ ຫວັງຢ່າງຍິ່ງວ່າ ບັນດາທ່ານຜູ້ອ່ານ, ນັກຄົ້ນຄວ້າ, ນັກຮຽນຮູ້ປັນຍາຊົນ ແລະ ຜູ້ນຳໃຊ້ ຈະຊ່ວຍໃຫ້ຄຳຕຳນິຕິຊົມ, ແນະນຳ ແລະ ໃຫ້ຄຳເຫັນ ເພື່ອໃຫ້ຄະນະຄົ້ນຄວ້າຂຽນປຶ້ມຄູ່ມືສະບັບນີ້ ສືບຕໍ່ຖອດຖອນບົດຮຽນ ແລະ ປັບປຸງເນື້ອໃນໃຫ້ມີຄວາມຄົບຖ້ວນ ແລະ ສົມບູນຍິ່ງຂຶ້ນໃນອະນາຄົດ.

ຫວັງຢ່າງຍິ່ງວ່າ ປຶ້ມຄູ່ມືສະບັບນີ້ ຈະເປັນປະໂຫຍດ ແລະ ປະກອບສ່ວນໃຫ້ແກ່ທ່ານຜູ້ທີ່ເຮັດວຽກຕົວຈິງ ໂດຍສະເພາະ ແມ່ນຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ຈ່າສານ ຕະຫຼອດເຖິງຜູ້ທີ່ມີຄວາມສົນໃຈໃນການຊອກຮູ້ຮໍ່າຮຽນເພື່ອໄປໝຸນໃຊ້ເຂົ້າໃນໜ້າວຽກຕົວຈິງໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ຂໍສະແດງຄວາມຂອບໃຈຕໍ່ຄະນະຮັບຜິດຊອບທຸກທ່ານທີ່ໄດ້ເອົາໃຈໃສ່ຄົ້ນຄວ້າ, ຊີ້ນຳ ແລະ ປະກອບສ່ວນສ້າງປຶ້ມຄູ່ມືສະບັບນີ້ໃຫ້ມີຄວາມສົມບູນ, ສະແດງຄວາມຂອບໃຈຕໍ່ຄະນະນຳສານປະຊາຊົນສູງສຸດ ທີ່ໃຫ້ການຊີ້ນຳຢ່າງໃກ້ຊິດ ແລະ ສະແດງຄວາມຂອບໃຈ ຕໍ່ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT) ທີ່ໃຫ້ການຊ່ວຍເຫຼືອດ້ານວິຊາການ-ງົບປະມານໃນການສ້າງປຶ້ມຄູ່ມືສະບັບນີ້.

ຜູ້ຊີ້ນຳ

ສາລະບານ

ພາກທີ I ຄວາມຮູ້ທົ່ວໄປ ກ່ຽວກັບການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງ ຜູ້ຖືກເຄາະຮ້າຍ.....1
I. ຄວາມໝາຍ ແລະ ຄວາມສຳຄັນ 1
II. ຈຸດປະສົງ 1
III. ນະໂຍບາຍ ແລະ ຫຼັກການ ຂອງການດຳເນີນຄະດີການຄ້າມະນຸດ 2
1. ນະໂຍບາຍຂອງລັດ 2
2. ຫຼັກການຂອງການດຳເນີນຄະດີການຄ້າມະນຸດ 2
IV. ການອະທິບາຍຄຳສັບ 2
V. ຂອບເຂດ ແລະ ວິທີການນຳໃຊ້ 3
1. ຂອບເຂດການນຳໃຊ້ 3
2. ວິທີການນຳໃຊ້ 3
ພາກທີ II ຕິວຊີ້ວັດ ການດຳເນີນຄະດີຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ 5
I. ຄວາມຮັບຮູ້ທົ່ວໄປກ່ຽວກັບຕິວຊີ້ວັດ 5
1. ຄວາມເປັນມາ ຂອງຕິວຊີ້ວັດ 5
2. ປະເພດຕິວຊີ້ວັດ 6
II. ເນື້ອໃນຕິວຊີ້ວັດ ຂອງການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ..6
1. ຄວາມປອດໄພ ແລະ ຄວາມລັບສ່ວນຕົວ ຂອງຜູ້ຖືກເຄາະຮ້າຍ 6
2. ຫຼັກຖານໃນການດຳເນີນຄະດີຄ້າມະນຸດ.....7
3. ວິທີປະຕິບັດຂອງຜູ້ພິພາກສາ ແລະ ພະນັກງານສານ ຕໍ່ຜູ້ຖືກເຄາະຮ້າຍ/ພະຍານ 9
4. ການສະໜອງຂໍ້ມູນ ແລະ ການບໍລິການ ໃຫ້ແກ່ຜູ້ຖືກເຄາະຮ້າຍ 10
5. ການຟື້ນຟູສິດຜູ້ຖືກເຄາະຮ້າຍ 12
6. ການໃຫ້ບໍລິການທາງການແພດ ແລະ ນິຕິເວດ 14
7. ຜູ້ຖືກເຄາະຮ້າຍທີ່ເປັນເດັກ 15
8. ຜູ້ຖືກເຄາະຮ້າຍທີ່ເປັນຄົນພິການ 18
ພາກທີ III ການຮ່ວມມືສາກົນ ແລະ ການເກັບກຳ, ວິເຄາະ ແລະ ການເຜີຍແຜ່ຂໍ້ມູນ 22
I. ການຮ່ວມມືສາກົນດ້ານການຄ້າມະນຸດ 22
1. ການຮ່ວມມືສາກົນ ຕາມສົນທິສັນຍາຕ້ານການຄ້າມະນຸດ 22
2. ການຮ່ວມມື ຕາມສົນທິສັນຍາສອງຝ່າຍ ຫຼື ຫຼາຍຝ່າຍ 23
3. ຮູບການສົ່ງຄຳຂໍການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງຂໍ້ມູນຫຼັກຖານ 23

4. ຂອບເຂດການຮ່ວມມືດ້ານການດຳເນີນຄະດີ 24
5. ການປະຕິເສດການຮ່ວມມືສາກົນ 25
II. ການເກັບກຳ, ວິເຄາະ ແລະ ເຜີຍແຜ່ຂໍ້ມູນ 25
ເອກະສານອ້າງອີງ 28
ເອກກະສານຊ້ອນທ້າຍ 29

ພາກທີ I
ຄວາມຮູ້ທົ່ວໄປກ່ຽວກັບການດຳເນີນຄະດີ ການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ

I. ຄວາມໝາຍ ແລະ ຄວາມສຳຄັນ

ການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ໝາຍເຖິງການປະຕິບັດຕາມຫຼັກການສາກົນ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍເຊັ່ນ: ການເອົາຄຳໃຫ້ການ ຫຼື ການສຳພາດ, ການໄຕ່ສວນຄະດີໃນທີ່ປະຊຸມສານ ຕ້ອງຄຳນຶງເຖິງຄວາມປອດໄພ, ຄວາມລັບ, ການທົດແທນຄ່າເສຍຫາຍທາງແພ່ງ, ຄວາມຍຸຕິທຳ, ສິດ ແລະ ຜົນປະໂຫຍດຂອງຜູ້ຖືກເຄາະຮ້າຍ ແລະ ອື່ນໆ ໃນຂັ້ນຕອນຂອງການດຳເນີນຄະດີ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ມີຄວາມສຳຄັນ ໂດຍສະເພາະ ການສະໜອງຂໍ້ມູນຫຼັກຖານທີ່ຖືກຕ້ອງ, ການເປັນພະຍານ, ການຖືກແກ້ແຄ້ນ ຈາກຜູ້ກະທຳຜິດ ຫຼື ຈຳເລີຍ, ຜົນກະທົບທາງດ້ານຮ່າງກາຍ ແລະ ຈິດໃຈ, ປົກປ້ອງຜູ້ຖືກເຄາະຮ້າຍ ແລະ ຊ່ວຍໃຫ້ສານພິຈາລະນາລົງໂທດຜູ້ກະທຳຜິດຖືກຕ້ອງຕາມກົດໝາຍ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເທົ່ານັ້ນ ທີ່ຈະຮູ້ດີກວ່າຄົນອື່ນວ່າ ບຸກຄົນ ຫຼື ກຸ່ມຄົນໃດ ທີ່ເປັນຜູ້ຄ້າມະນຸດ ຫຼື ເປັນຜູ້ກະທຳຜິດຈາກການຄ້າມະນຸດ. ຜູ້ຖືກເຄາະຮ້າຍທີ່ເປັນພະຍານບາງຄັ້ງມີຄວາມສ່ຽງທີ່ຈະຖືກຂົ່ມຂູ່.

ສະນັ້ນ, ສານຕ້ອງປະຕິບັດຕາມຫຼັກການສາກົນ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ, ປົກປ້ອງຜູ້ຖືກເຄາະຮ້າຍໃຫ້ມີຄວາມປອດໄພ, ຫຼຸດຜ່ອນຜົນກະທົບທາງດ້ານຈິດໃຈ, ຄວາມອັບອາຍ, ກຽດສັກສີ ແລະ ການມີປົມດ້ອຍ, ໃຫ້ຜູ້ຖືກເຄາະຮ້າຍໄດ້ຮັບການຟື້ນຟູສິດ ແລະ ການທົດແທນຄ່າເສຍຫາຍທາງແພ່ງ.

II. ຈຸດປະສົງ

ຈຸດປະສົງຂອງການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍເພື່ອ:

- ໃຫ້ຜູ້ຖືກເຄາະຮ້າຍມີຄວາມປອດໄພ, ປົກປ້ອງສິດ ແລະ ຜົນປະໂຫຍດ ແລະ ຮັກສາຄວາມລັບສ່ວນຕົວ;
- ໄດ້ຮັບການທົດແທນຄ່າເສຍຫາຍທາງແພ່ງຢ່າງເໝາະສົມ ແລະ ປົກປ້ອງບໍ່ໃຫ້ກາຍເປັນຜູ້ຖືກເຄາະຮ້າຍ ຫຼື ໄດ້ຮັບຄວາມບອບຊ້ຳທາງດ້ານຈິດໃຈອີກ;
- ໄດ້ຮັບການຟື້ນຟູສິດ ຕາມຄວາມເໝາະສົມ ແລະ ໄດ້ຮັບຄວາມຍຸຕິທຳ;
- ໃຫ້ຜູ້ກະທຳຜິດໄດ້ຮັບການລົງໂທດຕາມກົດໝາຍ ແລະ ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ.

III. ນະໂຍບາຍ ແລະ ຫຼັກການ ຂອງການດຳເນີນຄະດີການຄ້າມະນຸດ

1. ນະໂຍບາຍຂອງລັດ

ລັດ ຖືເອົາວຽກງານຕ້ານການຄ້າມະນຸດ ເປັນວຽກງານໜຶ່ງທີ່ສຳຄັນທີ່ສຸດ ຈຶ່ງໄດ້ເຂົ້າຮ່ວມເປັນ ພາຄີໃນສົນທິສັນຍາ ແລະ ອະນຸສັນຍາຕ່າງໆ ເປັນຕົ້ນ ສົນທິສັນຍາປາເລີໂມ ແລະ ອານຸສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ, ພ້ອມນັ້ນ ລັດຍັງອາງນະໂຍບາຍ ແລະ ກຳນົດລະບຽບການ ດ້ວຍ ການສ້າງບັນດາກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບການຕ້ານການຄ້າມະນຸດເຊັ່ນ: ກົດໝາຍວ່າ ດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, ປັບປຸງກົດໝາຍອາຍາ ໂດຍໄດ້ເພີ່ມການກະທຳຜິດໃນ ສະຖານການຄ້າມະນຸດ, ປະມວນກົດໝາຍອາຍາ, ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ.

ລັດສ້າງເງື່ອນໄຂສະດວກໃຫ້ແກ່ການເຄື່ອນໄຫວໃນການດຳເນີນຄະດີການຄ້າມະນຸດ ດ້ວຍ ການສະໜອງງົບປະມານ, ປະກອບບຸກຄະລາກອນ, ພາຫະນະ ແລະ ອຸປະກອນຮັບໃຊ້ເຂົ້າໃນການ ດຳເນີນຄະດີ ເພື່ອເຮັດໃຫ້ການພິຈາລະນາຕັດສິນຄະດີການຄ້າມະນຸດ ໃຫ້ມີຄວາມຖືກຕ້ອງ ແລະ ເປັນທຳ.

ລັດ ສົ່ງເສີມການໂຄສະນາ, ສຶກສາອົບຮົມທົ່ວປວງຊົນໃນຫຼາຍຮູບການ ແລະ ວິທີການ ໃຫ້ ປະຊາຊົນຮັບຮູ້ ແລະ ເຂົ້າໃຈກ່ຽວກັບຜົນຮ້າຍຂອງການຄ້າມະນຸດ ແລະ ມີມາດຕະການເດັດຂາດຕໍ່ຜູ້ ຄ້າມະນຸດ.

2. ຫຼັກການ ຂອງການດຳເນີນຄະດີການຄ້າມະນຸດ

ການດຳເນີນຄະດີການຄ້າມະນຸດ ຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ຕ້ອງປະຕິບັດຕາມ ຫຼັກການຂອງການດຳເນີນຄະດີອາຍາ ແລະ 6 ຫຼັກການ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານ ການຄ້າມະນຸດແລ້ວ ຍັງຕ້ອງໄດ້ປະຕິບັດຕາມຫຼັກການສົນທິສັນຍາສາ ແລະ ພາກປະຕິບັດສາກົນ ເປັນຕົ້ນ ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ຄູ່ມືແນະນຳ ກ່ຽວກັບສິດທິມະນຸດ ແລະ ການຄ້າມະນຸດ ທີ່ສ້າງຂຶ້ນໂດຍສຳນັກງານຂ້າຫຼວງໃຫຍ່ດ້ານ ສິດທິມະນຸດຂອງອົງການສະຫະປະຊາຊາດ, ປຶ້ມຄູ່ມື ສຳລັບປະເທດສະມາຊິກອາຊຽນກ່ຽວກັບການ ດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ.

IV. ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນປຶ້ມຄູ່ມືສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຖືກເຄາະຮ້າຍ** ໝາຍເຖິງ ຜູ້ໄດ້ຮັບຄວາມເສຍຫາຍໂດຍກົງ ທາງດ້ານສຸຂະພາບ, ຊີວິດ, ຈິດໃຈ, ກຽດສັກສີ, ເສລີພາບ ຫຼື ຊັບສິນ ຈາກທຸກຮູບການຂອງການຄ້າມະນຸດ;
2. **ການໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ** ໝາຍເຖິງ ການໃຫ້ບ່ອນພັກເຊົາຊົ່ວຄາວທີ່ປອດໄພ ແລະ ສິ່ງທີ່ຈຳເປັນໃນການດຳລົງຊີວິດ, ດ້ານການແພດ, ກົດໝາຍ, ການສຶກສາ, ແລະ ຝຶກ ອົບຮົມວິຊາອາຊີບ, ເສດຖະກິດການກັບຄືນສູ່ຄອບຄົວ ແລະ ສັງຄົມ;

3. **ການປົກປ້ອງຜູ້ຖືກເຄາະຮ້າຍ** ໝາຍເຖິງ ການກອບກູ້, ການສົ່ງຕໍ່, ການຮັກສາຄວາມປອດໄພ ແລະ ການຮັກສາຄວາມລັບ ກ່ຽວກັບຜູ້ຖືກເຄາະຮ້າຍ;
4. **ຜູ້ຖືກເສຍຫາຍ** ໝາຍເຖິງ ບຸກຄົນທີ່ໄດ້ຮັບຄວາມເສຍຫາຍທາງດ້ານສຸຂະພາບ ຫຼື ຊີວິດ, ວັດຖຸ ຫຼື ຈິດໃຈ ຍ້ອນການກະທຳຜິດຂອງບຸກຄົນອື່ນ;
5. **ຄ່າເສຍຫາຍ** ໝາຍເຖິງ ຈຳນວນເງິນ ຫຼື ວັດຖຸສິ່ງຂອງ ຂອງຜູ້ຮັບຜິດຊອບ ເພື່ອທົດແທນຄວາມເສຍຫາຍທີ່ເກີດຂຶ້ນໃຫ້ແກ່ຜູ້ຖືກເຄາະຮ້າຍ;
6. **ຄ່າຊົດເຊີຍ** ໝາຍເຖິງຄ່າແຮງງານ, ລາຍໄດ້ ຫຼື ເງິນເດືອນທີ່ຜູ້ຖືກເຄາະຮ້າຍຄວນຈະໄດ້ຮັບ;
7. **ຄວາມເສຍຫາຍທາງດ້ານຈິດໃຈ** ໝາຍເຖິງ ຄວາມເສຍຫາຍ ເນື່ອງຈາກຄວາມເສົ້າໂສກເສຍໃຈ, ສະຫຼົດໃຈ ແລະ ທົດຫູ່ຂອງບຸກຄົນໃດໜຶ່ງ ຊຶ່ງໄດ້ຮັບການກະທົບກະເທືອນຈາກການກະທຳຂອງບຸກຄົນອື່ນ;
8. **ຄວາມເສຍຫາຍທາງດ້ານ ຊື່ສຽງ, ກຽດສັກສີ** ໝາຍເຖິງ ຄວາມເສຍຫາຍທີ່ເກີດຂຶ້ນແກ່ບຸກຄົນໃດໜຶ່ງທີ່ໄດ້ຖືກກ່າວຫາ, ໃສ່ຮ້າຍ, ປ້ອຍດ່າ ຫຼື ເຜີຍຂໍ້ມູນສ່ວນຕົວ;
9. **ການສຳພາດ** ໝາຍເຖິງ ການເກັບກຳຂໍ້ມູນ, ຫຼັກຖານ ຫຼື ການບັນທຶກເອົາຄຳເວົ້າຂອງເດັກຖືກເຄາະຮ້າຍ, ເດັກເປັນພະຍານ ແລະ ເດັກພິການ;
10. **ການເອົາຄຳໃຫ້ການ** ໝາຍເຖິງ ການເກັບກຳຂໍ້ມູນ, ຫຼັກຖານ ຫຼື ການບັນທຶກເອົາຄຳເວົ້າຂອງຄູ່ຄວາມ ຫຼື ບຸກຄົນອື່ນທີ່ມີສ່ວນກ່ຽວຂ້ອງກັບຄະດີ;
11. **ເຫຍື່ອ** ໝາຍເຖິງ ເປົ້າໝາຍເປັນຜູ້ຖືກເຄາະຮ້າຍ;
12. **ການຟື້ນຟູສິດ** ໝາຍເຖິງ ການຮັບຮູ້ສິດທີ່ຖືກລະເມີດ ໂດຍບຸກຄົນອື່ນ ເພື່ອເຮັດໃຫ້ຜູ້ມີສິດໃນເບື້ອງຕົ້ນ ໄດ້ກັບຄືນສູ່ສະຖານະເດີມຂອງການມີສິດ;
13. **ການສະໜອງຂໍ້ມູນໃຫ້ຜູ້ຖືກເຄາະຮ້າຍ** ໝາຍເຖິງ ການອະທິບາຍສິດໄດ້ຮັບການຟື້ນຟູ, ການທົດແທນຄ່າເສຍຫາຍ ຫຼື ຄ່າຊົດເຊີຍແຮງງານ ແລະ ຂັ້ນຕອນການດຳເນີນຄະດີອາຍາ ໃຫ້ຜູ້ຖືກເຄາະຮ້າຍ.

V. ຂອບເຂດ ແລະ ວິທີການນຳໃຊ້

1. ຂອບເຂດການນຳໃຊ້

ປຶ້ມຄູ່ມືການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍສະບັບນີ້ໃຊ້ສຳລັບຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ວິຊາການກົດໝາຍຢູ່ສານ ເພື່ອເປັນບ່ອນອີງໃນການຄົ້ນຄວ້າພິຈາລະນາຕັດສິນຄະດີການຄ້າມະນຸດ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ.

2. ວິທີການນຳໃຊ້

ປຶ້ມຄູ່ມືການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ຈະຖືກນຳໃຊ້ເປັນຄູ່ມື ແລະ ປະກອບເຂົ້າເນື້ອໃນຫຼັກສູດຂອງສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ ພ້ອມທັງຝຶກອົບຮົມໃຫ້ແກ່ຜູ້ພິພາກສາ,ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ວິຊາການກົດໝາຍ ໃຫ້ມີຄວາມຮັບຮູ້,

ຄວາມເຂົ້າໃຈເພີ່ມຂຶ້ນ ແລະ ເປັນເອກະພາບກັນທາງດ້ານຫຼັກການ, ຂັ້ນຕອນ, ວິທີການ, ລະບຽບການ ຂອງສາກົນ, ຫຼັກການດຳເນີນຄະດີອາຍາຂອງ ສປປ ລາວ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ແລະ ການ ຮ່ວມມືສາກົນ ທີ່ກ່ຽວຂ້ອງກັບການຕ້ານການຄ້າມະນຸດ.

ພາກທີ II
ຕົວຊີ້ວັດ ການດຳເນີນຄະດີການຄ້າມະນຸດຢຸ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ

I. ຄວາມຮັບຮູ້ທົ່ວໄປກ່ຽວກັບຕົວຊີ້ວັດ

1. ຄວາມເປັນມາ ຂອງຕົວຊີ້ວັດ

ສປປ ລາວ ໄດ້ລົງນາມໃນສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກ ໃນເດືອນພະຈິກ ປີ 2015 ຊຶ່ງທຸກປະເທດອາຊຽນ ມີພັນທະທາງກົດໝາຍ, ເປັນເຄື່ອງມືຊ່ວຍບັນດາປະເທດສະມາຊິກ ໃນການແກ້ໄຂສິ່ງທ້າທາຍ, ບູລິມະສິດ ແລະ ຍຸດທະສາດໃນການຕ້ານການຄ້າມະນຸດ ຕາມຈຸດປະສົງຕົ້ນຕໍຂອງສົນທິສັນຍາດັ່ງກ່າວ ໂດຍສະເພາະຕ້ອງປະຕິບັດຕາມ 4 ວິທີການເຂົ້າເຖິງຄວາມຍຸຕິທຳ ຄື:

- ສ້າງຄວາມເຂັ້ມແຂງ ແລະ ສ້າງເງື່ອນໄຂໃຫ້ຜູ້ຖືກເຄາະຮ້າຍ ໂດຍການສະໜັບສະໜຸນໃຫ້ຜູ້ຖືກເຄາະຮ້າຍມີກຳລັງໃຈ ແລະ ການມີສ່ວນຮ່ວມໃນຂັ້ນຕອນການດຳເນີນຄະດີ;
- ຫຼຸດຜ່ອນການຕົກເປັນຜູ້ຖືກເຄາະຮ້າຍ ແລະ ຄວາມບອບຊ້ຳທາງດ້ານຈິດໃຈ, ກຽດສັກສີ ແລະ ຄວາມອັບອາຍຕື່ມອີກ;
- ສ້າງຄວາມເຊື່ອໝັ້ນຂອງຜູ້ຖືກເຄາະຮ້າຍ ໃນລະບົບຕຸລາການ ແລະ ຂະບວນການຍຸຕິທຳທາງອາຍາ;
- ປົກປ້ອງຊື່ສຽງຂະບວນການຍຸຕິທຳທາງອາຍາ.

ສະນັ້ນ, ເພື່ອໃຫ້ໄດ້ຕາມ 4 ວິທີການເຂົ້າເຖິງຄວາມຍຸຕິທຳ ຕ້ອງຄຳນຶງເຖິງ 8 ຕົວຊີ້ວັດຂອງການດຳເນີນຄະດີການຄ້າມະນຸດຢຸ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ຈຶ່ງມີຄວາມຈຳເປັນຕ້ອງສ້າງປຶ້ມຄູ່ມືສະບັບນີ້ເປັນບ່ອນອີງໃນການຄົ້ນຄວ້າພິຈາລະນາຕັດສິນຄະດີການຄ້າມະນຸດ.

ຕົວຊີ້ວັດທີ່ຄຳນຶງເຖິງຜູ້ຖືກເຄາະຮ້າຍ ຍັງກຳນົດຫຼັກການຕ່າງໆ ທີ່ໄດ້ກຳນົດໄວ້ໃນຄູ່ມື ຂອງສະຫະປະຊາຊາດວ່າດ້ວຍຄວາມຍຸຕິທຳ ໃນເລື່ອງທີ່ກ່ຽວຂ້ອງກັບຜູ້ຖືກເຄາະຮ້າຍທີ່ເປັນເດັກ ແລະ ພະຍານໃນເຫດການອາຊະຍາກຳ[1], ຫຼັກການ ແລະ ຄູ່ມືທີ່ແນະນຳວ່າດ້ວຍສິດທິມະນຸດ ແລະ ການຄ້າມະນຸດ[2] ແລະ ເຄື່ອງມືທີ່ນຳໃຊ້ເຂົ້າໃນການຝຶກອົບຮົມ ກ່ຽວກັບການຕ້ານການຄ້າມະນຸດ ຂອງອົງການ

---

[1]ອານຸສັນຍາວ່າດ້ວຍ ການຄ້າມະນຸດ ຖືກຮັບຮອງໂດຍສະມັດຊາໃຫຍ່ ຂອງ ສປຊ ໃນມະຕິເລກທີ 55/25, ລົງວັນທີ 15 ພະຈິກ 2000 (ເອກະສານຊ້ອນທ້າຍ II). ມີຜົນບັງຄັບໃຊ້ໃນວັນທີ 25 ທັນວາ 2003. ສະຖານະຂອງການໃຫ້ສັດຕະຍາບັນຂອງອານຸສັນຍາດັ່ງກ່າວ ສາມາດປຶກສາຫາລືໄດ້ທີ່ເວັບໄຊທ໌: www.unodc.org/en/treaties/CTOC/signatures. ສາມາດເຂົ້າ ເບິ່ງບົດແນະນຳໂດຍສັງເຂບໄດ້ທີ່: www.globalrights.org/ site/DocServer/Annotated_Protocol.pdf?docID =2723.

[2]ຄະນະລັດຖະມົນຕີເສດຖະກິດ ແລະ ສັງຄົມ ຂອງສະຫະປະຊາຊາດ ມະຕິເລກທີ 2005/20 ECOSOC Resolution 2005/20.

ສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ (UNODC[3]).

2. ປະເພດຕົວຊີ້ວັດ

ການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ຕ້ອງປະຕິບັດຕາມ 8 ຕົວຊີ້ວັດ ດັ່ງນີ້:

1. ຄວາມປອດໄພ ແລະ ຄວາມລັບສ່ວນຕົວ ຂອງຜູ້ຖືກເຄາະຮ້າຍ;
2. ຫຼັກຖານໃນການດຳເນີນຄະດີການຄ້າມະນຸດ;
3. ວິທີປະຕິບັດຂອງຜູ້ພິພາກສາ ແລະ ພະນັກງານ ຕໍ່ຜູ້ຖືກເຄາະຮ້າຍ/ພະຍານ;
4. ການສະໜອງຂໍ້ມູນໃຫ້ແກ່ຜູ້ຖືກເຄາະຮ້າຍ;
5. ການຟື້ນຟູສິດຜູ້ຖືກເຄາະຮ້າຍ;
6. ການໃຫ້ບໍລິການທາງການແພດ ແລະ ນິຕິເວດ;
7. ຜູ້ຖືກເຄາະຮ້າຍທີ່ເປັນເດັກ;
8. ຜູ້ຖືກເຄາະຮ້າຍທີ່ເປັນຄົນພິການ.

II. ເນື້ອໃນຕົວຊີ້ວັດ ຂອງການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ



1. ຄວາມປອດໄພ ແລະ ຄວາມລັບສ່ວນຕົວຂອງຜູ້ຖືກເຄາະຮ້າຍ

ໃນໄລຍະການດຳເນີນຄະດີຢູ່ສານນັ້ນ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະຕ້ອງໄດ້ຮັບຄວາມປອດໄພທີ່ອາດຈະເກີດຂຶ້ນຈາກການຂົ່ມຂູ່, ນາບຂູ່, ບີບບັງຄັບເພື່ອໃຫ້ ຫຼື ບໍ່ໃຫ້ຜູ້ຖືກເຄາະຮ້າຍສະໜອງຂໍ້ມູນ, ເປີດເຜີຍຄວາມຈິງຂອງເຫດການ, ການຖືກກະທຳໃນໄລຍະຜູ້ກ່ຽວຕົກຢູ່ໃນຂະບວນການຄ້າມະນຸດໂດຍຈຳເລີຍໃນຄະດີການຄ້າມະນຸດ, ບຸກຄົນອື່ນທີ່ກ່ຽວຂ້ອງ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ.

ນອກຈາກ ຄວາມປອດໄພຂອງຜູ້ຖືກເຄາະຮ້າຍແລ້ວ ສານຍັງຕ້ອງຮັກສາຂໍ້ມູນທີ່ກ່ຽວຂ້ອງກັບຄະດີການຄ້າມະນຸດຂອງຜູ້ຖືກເຄາະຮ້າຍໃຫ້ເປັນຄວາມລັບ ໂດຍສະເພາະປະຫວັດ, ຊື່ ແລະ ນາມສະກຸນ, ທີ່ຢູ່ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກ່ອນທີ່ຈະນຳເອົາຂໍ້ມູນ ຫຼື ຄຳຕັດສິນຂອງສານ ອອກເຜີຍແຜ່ໃນສື່ສັງຄົມອອນລາຍ ສານຕ້ອງໄດ້ຄຳນຶງເຖິງຄວາມລັບທີ່ເປັນສ່ວນຕົວຂອງຜູ້ຖືກເຄາະຮ້າຍ ເພື່ອບໍ່ໃຫ້ໄດ້ຮັບຄວາມອັບອາຍ ຫຼື ຄວາມປອບຊ້ຳທາງດ້ານຈິດໃຈຕື່ມອີກ.

ສະນັ້ນ, ເພື່ອຮັບປະກັນຄວາມປອດໄພ ແລະ ຄວາມລັບສ່ວນຕົວຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສານຕ້ອງປະຕິບັດຕາມບັນດາຫຼັກການພື້ນຖານດັ່ງນີ້:

[3]ຫຼັກການ ແລະ ຄູ່ມືແນະນຳ ວ່າດ້ວຍສິດທິມະນຸດ ແລະ ການຄ້າມະນຸດ; ບົດລາຍງານຂອງອົງການຂ້າຫຼວງ ດ້ານສິດທິມະນຸດ ຂອງສະຫະປະຊາຊາດ ປະຈຳສະພາເສດຖະກິດ ແລະ ສັງຄົມ (2002) (ເລກທີ E/2002/68/Add.1).



- ການດຳເນີນຄະດີ ຕ້ອງດຳເນີນຢ່າງປິດລັບ;
- ປະເມີນຄວາມສ່ຽງ, ຄວາມປອດໄພຂອງຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍທີ່ເປັນພະຍານ;
- ຄຳຕັດສິນຂອງສານທີ່ຈະນຳອອກເປີດເຜີຍ ອອກສື່ສັງຄົມອອນລາຍ,ນຳໃຊ້ເປັນບົດສອນ ແລະ ອື່ນໆສານຕ້ອງໃສ່ຊື່ ແລະ ນາມສະກຸນແຝງ, ບໍ່ບອກທີ່ຢູ່ແທ້ ຂອງຜູ້ຖືກເຄາະຮ້າຍ
- ຫ້າມບໍ່ໃຫ້ເອົາຄຳຕັດສິນ ແລະ ຄຳພິພາກສາ ທີ່ລະບຸລາຍລະອຽດກ່ຽວກັບຊື່ ແລະ ນາມສະກຸນ, ທີ່ຢູ່ຂອງຜູ້ຖືກເຄາະຮ້າຍໄປເຜີຍແຜ່ທາງສື່ສິ່ງພິມ ແລະ ອື່ນໆ[1].

ນອກຈາກນີ້, ການດຳເນີນຄະດີການຄ້າມະນຸດຢູ່ສານ ຕ້ອງປະຕິບັດຕາມ ມາດຕາ 21 ຂອງ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ທີ່ກຳນົດໄວ້ວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງດຳເນີນຄະດີຢ່າງປິດລັບ[4] ແລະ ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ຜູ້ຖືກເຄາະຮ້າຍ ຜູ້ພິພາກສາທີ່ຮັບຜິດຊອບຄະດີ ຕ້ອງຮັກສາຄວາມລັບກ່ຽວກັບປະຫວັດ, ຊື່ ແລະ ນາມສະກຸນ, ທີ່ຢູ່ ຂອງຜູ້ຖືກເຄາະຮ້າຍ ຊຶ່ງອາດສ້າງຄວາມອັບອາຍ, ກຽດສັກສີ, ຊື່ສຽງ ຫຼື ມີຄວາມສ່ຽງທີ່ເປັນໄພອັນຕະລາຍ. ສະນັ້ນ, ໃນທຸກຂັ້ນຕອນຂອງການດຳເນີນຄະດີ ສານຕ້ອງປະເມີນຄວາມສ່ຽງຂອງຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍທີ່ເປັນພະຍານ ວ່າມີຄວາມປອດໄພໂດຍບໍ່ໃຫ້ຖືກທຳຮ້າຍ, ຖືກຂົ່ມຂູ່, ບັງຄັບ, ນາບຂູ່ ຈາກຈຳເລີຍ, ບຸກຄົນອື່ນທີ່ກ່ຽວຂ້ອງ ຫຼື ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ທີ່ອາດຈະພາໃຫ້ຜູ້ຖືກເຄາະຮ້າຍ ເກີດຄວາມຢ້ານກົວ, ຄວາມອັບອາຍ, ບໍ່ປອດໄພ ແລະ ອື່ນໆ ຊຶ່ງຈະພາໃຫ້ຜູ້ຖືກເຄາະຮ້າຍ ບໍ່ເວົ້າຄວາມຈິງ, ມິດງຽບ, ບໍ່ໃຫ້ຄຳຕອບ ຫຼື ບໍ່ເຂົ້າຮ່ວມການດຳເນີນຄະດີ. ພ້ອມນີ້ ສານຕ້ອງຮັກສາຄວາມລັບທີ່ກ່ຽວກັບຄະດີຂອງຜູ້ຖືກເຄາະຮ້າຍ ໂດຍສະເພາະ ຄຳຕັດສິນ ແລະ ຄຳພິພາກສາຂອງສານທີ່ຈະເປີດເຜີຍໃນສື່ສັງຄົມອອນລາຍ, ນຳໃຊ້ເປັນບົດສອນ ແລະ ອື່ນໆ ສານຕ້ອງໃສ່ຊື່ ແລະ ນາມສະກຸນແຝງ ແລະ ບໍ່ໃສ່ທີ່ຢູ່ແທ້ຂອງຜູ້ຖືກເຄາະຮ້າຍ.



2. ຫຼັກຖານ ໃນການດຳເນີນຄະດີການຄ້າມະນຸດ

ຫຼັກຖານໃນການດຳເນີນຄະດີການຄ້າມະນຸດ ສານຕ້ອງຄົ້ນຄວ້າພິຈາລະນາບົນພື້ນຖານທີ່ເຈົ້າໜ້າທີ່ຕຳຫຼວດ ແລະ ອົງການໄອຍະການປະຊາຊົນໄດ້ປະກອບໃນສຳນວນຄະດີຢ່າງຄົບຖ້ວນ ແລະ ພາວະວິໄສແລ້ວ ແຕ່ຄວນເອົາໃຈໃສ່ບັນດາຫຼັກການພື້ນຖານ ດັ່ງນີ້:

1. ຄຳໃຫ້ການ ຫຼື ສຳພາດ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໂດຍກົງ ຫຼື ຜ່ານອົງ

[4]ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 21, ສະບັບປັບປຸງ ປີ 2017

ການ ຈັດ ຕັ້ງ ທີ່ ກ່ຽວ ຂ້ອງ ຫຼື ການ ໄຕ່ ສອນ ໃນ ທີ່ ປະ ຊຸມ ສານ ຖືເປັນ ຫຼັກ ຖານ ທີ່ ເປັນ ບຸລິ ມະ ສິດ ຕົ້ນ ຕໍ ໃຫ້ ສານ ນຳ ມາ ພິ ຈາ ລະ ນາ, ການ ດຳ ເນີນ ຄະ ດີ ຕ້ອງ ຮັບ ປະ ກັນ ຄວາມ ວ່ອງ ໄວ ແລະ ຖືກ ຕ້ອງ;

2. ຫຼັກ ຖານ ທີ່ ນຳ ໃຊ້ ໃນ ຂັ້ນ ຕອນ ການ ດຳ ເນີນ ຄະ ດີ ຕ້ອງ ນຳ ໃຊ້ ຜູ້ ຊ່ຽວ ຊານ ພິ ສູດ ແລະ ຢັ້ງ ຢືນ ຄວາມ ຖືກ ຕ້ອງ ຂອງ ຫຼັກ ຖານ[5] ໂດຍ ສະ ເພາະ ຄະ ດີ ການ ຄ້າ ມະ ນຸດ ທີ່ ມີ ຄວາມ ສະ ຫຼັບ ຊັບ ຊ້ອນ, ມີ ຜົນ ກະ ທົບ ທາງ ດ້ານ ຈິດ ໃຈ, ຜົນ ກະ ທົບ ຕໍ່ ກຸ່ມ ສ່ຽງ ທີ່ ເປັນ ແມ່ ຍິງ ແລະ ເດັກ. ສະ ນັ້ນ, ສານ ຕ້ອງ ໃຫ້ ຜູ້ ຖືກ ເຄາະ ຮ້າຍ ມີ ສ່ວນ ຮ່ວມ ໃນ ການ ເລືອກ ເອົາ ຜູ້ ທີ່ ຈະ ມາ ຊ່ວຍ ປົກ ປ້ອງ. ກໍ ລະ ນີ ຜູ້ ຖືກ ເຄາະ ຮ້າຍ ທີ່ ບໍ່ ຮູ້ ພາ ສາ ລາວ ຕ້ອງ ແຕ່ ງ ຕັ້ງ ຜູ້ ແປ ພາ ສາ;

3. ການ ພິ ຈາ ລະ ນາ ທົດ ແທນ ຄ່າ ເສຍ ຫາຍ ຈາກ ການ ກະ ທຳ ຜິດ ທີ່ ຜູ້ ຖືກ ເຄາະ ຮ້າຍ ຈະ ໄດ້ ຮັບ ຕາມ ການ ຢັ້ງ ຢືນ ຈາກ ຊ່ຽວ ຊານ ສະ ເພາະ ດ້ານ;

4. ການ ໄຕ່ ສອນ ໃນ ທີ່ ປະ ຊຸມ ສານ ຕ້ອງ ຮັບ ປະ ກັນ ວ່າ ຜູ້ ຖືກ ເຄາະ ຮ້າຍ ຈາກ ການ ຄ້າ ມະ ນຸດ ຈະ ບໍ່ ປະ ເຊີນ ໜ້າ ກັບ ຈຳ ເລີຍ ຫຼື ບຸກ ຄົນ ອື່ນ ທີ່ ກ່ຽວ ຂ້ອງ ທີ່ ພາ ໃຫ້ ຜູ້ ຖືກ ເຄາະ ຮ້າຍ ຢ້ານ ກົວ ເຊັ່ນ: ມີ ສິ່ງ ກຳ ບັງ, ນຳ ໃຊ້ ວີ ດີ ໂອ, ນຳ ສະ ເໜີ ວີ ດີ ໂອ ທີ່ ມີ ການ ບັນ ທຶກ ໄວ້ ລ່ວງ ໜ້າ, ແຍກ ຫ້ອງ ລໍ ຖ້າ ກ່ອນ ແລະ ຫຼັງ ການ ສະ ເໜີ ຫຼັກ ຖານ ແລະ ອື່ນ ໆ.

ຕົວ ຢ່າງ: ການ ໄຕ່ ສອນ ຄະ ດີ ການ ຄ້າ ມະ ນຸດ ສານ ອາດ ຈະ ໃຫ້ ຜູ້ ຖືກ ເຄາະ ຮ້າຍ ແລະ ຈຳ ເລີຍ ລໍ ຖ້າ ຢູ່ ຄົນ ລະ ຫ້ອງ, ບໍ່ ໃຫ້ ເຫັນ ກັນ, ໃນ ເວ ລາ ທີ່ ສານ ຮຽກ ຜູ້ ຖືກ ເຄາະ ຮ້າຍ ຫຼື ຈຳ ເລີຍ ເຂົ້າ ຫ້ອງ ປະ ຊຸມ ສານ ເພື່ອ ໄຕ່ ສອນ ໃຫ້ ນຳ ເອົາ ຜູ້ ຖືກ ເຄາະ ຮ້າຍ ຫຼື ຈຳ ເລີຍ ເຂົ້າ ຫ້ອງ ປະ ຊຸມ ສານ ເທື່ອ ລະ ຄົນ ໂດຍ ຮັບ ປະ ກັນ ວ່າ ບໍ່ ໃຫ້ ຜູ້ ຖືກ ເຄາະ ຮ້າຍ ປະ ເຊີນ ໜ້າ ກັບ ຈຳ ເລີຍ, ໃນ ຫ້ອງ ປະ ຊຸມ ສານ ໃຫ້ ແຍກ ກັນ ຢູ່ ຄົນ ລະ ສ່ວນ ໂດຍ ມີ ສິ່ງ ກຳ ບັງ, ໃນ ເວ ລາ ໄຕ່ ສອນ ຮັບ ປະ ກັນ ວ່າ ຜູ້ ຖືກ ເຄາະ ຮ້າຍ ຈະ ບໍ່ ໄດ້ ຍິນ ສຽງ ຂອງ ຈຳ ເລີຍ ໂດຍ ກົງ ແລະ ຈຳ ເລີຍ ບໍ່ ສາ ມາດ ຈຳ ແນກ ສຽງ ຂອງ ຜູ້ ຖືກ ເຄາະ ຮ້າຍ ໄດ້.



(ຮູບ ແບບ ຫ້ອງ ປະ ຊຸມ ສານ ພິ ຈາ ລະ ນາ ຕັດ ສິນ ຄະ ດີ ການ ຄ້າ ມະ ນຸດ)

[5] ກົດ ໝາຍ ວ່າ ດ້ວຍ ການ ດຳ ເນີນ ຄະ ດີ ອາ ຍາ ມາດ ຕາ 43, ສະ ບັບ ປັບ ປຸງ ປີ 2017

3. ວິທີປະຕິບັດ ຂອງຜູ້ພິພາກສາ ແລະ ພະນັກງານສານ ຕໍ່ຜູ້ຖືກເຄາະຮ້າຍ/ພະຍານ

ຜູ້ພິພາກສາ ແລະ ພະນັກງານສານ ຕ້ອງໄດ້ຮັບການຝຶກອົບຮົມ ກ່ຽວກັບກົດໝາຍທີ່ກ່ຽວຂ້ອງ ແລະ ຂັ້ນຕອນການດຳເນີນຄະດີການຄ້າມະນຸດຕ່າງໆ, ມີມະນຸດສຳພັນທີ່ດີ, ບໍ່ເຄັ່ງຂຶມ, ມີຄວາມຍືດແຍ້ມແຈ່ມໃສ, ການເວົ້າຈາອ່ອນໂຍນ, ເປັນມິດ, ຫຼີກລ້ຽງການປະພຶດ ຫຼື ການໃຊ້ຄຳເວົ້າທີ່ບໍ່ສຸພາບ ແລະ ການກະທຳໃດໆ ທີ່ເປັນການຊ້ຳເຕີມຜູ້ຖືກເຄາະຮ້າຍ. ນອກຈາກນີ້ ຜູ້ພິພາກສາ ຕ້ອງຮັກສາຄວາມລັບຂອງຜູ້ຖືກເຄາະຮ້າຍ ເພື່ອເຮັດໃຫ້ຜູ້ຖືກເຄາະຮ້າຍມີຄວາມເຊື່ອໝັ້ນ, ມີຄວາມສະບາຍໃຈ ແລະ ບໍ່ມີຄວາມຢ້ານກົວ. ສະນັ້ນ, ການປະຕິບັດຂອງຜູ້ພິພາກສາ ແລະ ພະນັກງານສານ ຕໍ່ຜູ້ຖືກເຄາະຮ້າຍ/ພະຍານ ຕ້ອງປະຕິບັດຕາມຫຼັກການພື້ນຖານດັ່ງນີ້:



1. ມີໜ່ວຍງານສະເພາະ/ບຸກຄະລາກອນ ທີ່ມີຄວາມຊຳນິຊຳນານ ໃນການພິຈາລະນາຄະດີການຄ້າມະນຸດຢູ່ສານ (ສົນທິສັນຍາ ACTIP, ມາດຕາ 16.1);

2. ສານ ຄວນສ້າງຄູ່ມື ແລະ ມາດຕະຖານໃນການຈັດຕັ້ງປະຕິບັດກ່ຽວກັບວິທີການພິຈາລະນາຄະດີການຄ້າມະນຸດ ໃຫ້ແກ່ຜູ້ພິພາກສາ ແລະ ພະນັກງານສານ ໂດຍສຸມໃສ່ການປະຕິບັດທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ ເພື່ອຫຼຸດຜ່ອນຄວາມບອບຊ້ຳທາງດ້ານຈິດໃຈ, ກຽດສັກສີ, ຄວາມອັບອາຍ ແລະ ວິທີສຳພາດ ຫຼື ການເອົາຄຳໃຫ້ການ, ການເກັບກຳຂໍ້ມູນຫຼັກຖານ ແລະ ເອກະສານອື່ນທີ່ຈຳເປັນ ເພື່ອພິຈາລະນາໄຕ່ສວນຄະດີໃນທີ່ປະຊຸມສານ (ສົນທິສັນຍາ ACTIP, ມາດຕາ 11.1 (b) ແລະ 14.10 (c));

3. ສານ ຄວນສ້າງລະບຽບການສະເພາະ ແລະ ກົດໝາຍ ກ່ຽວກັບການປະພຶດປະຕິບັດຂອງຜູ້ພິພາກສາ ແລະ ພະນັກງານສານ ໃນເວລາດຳເນີນຄະດີການຄ້າມະນຸດ. ຊຶ່ງລະບຽບການສະເພາະເຫຼົ່ານີ້ ຄວນເຜີຍແຜ່ຕໍ່ສາທາລະນະ (ສົນທິສັນຍາ ACTIP, ມາດຕາ 16.1, ກົດໝາຍຜູ້ພິພາກສາ ມາດຕາ 33);

4. ການຝຶກອົບຮົມ ກ່ຽວກັບການຕ້ານການຄ້າມະນຸດໃຫ້ແກ່ຜູ້ພິພາກສາ ແລະ ພະນັກງານສານ ຄວນເລັ່ງໃສ່ຫຼັກການ ທີ່ຄຳນຶງເຖິງຄວາມບອບຊ້ຳທາງດ້ານຈິດໃຈ, ກຽດສັກສີ ແລະ ຄວາມອັບອາຍ ຂອງຜູ້ຖືກເຄາະຮ້າຍ ແລະ ສັງລວມເອົາບັນດາຫຼັກການຕ່າງໆ ທີ່ຄຳນຶງເຖິງຜູ້ຖືກເຄາະຮ້າຍ ເຂົ້າໃນຫຼັກສູດທີ່ໄດ້ຖືກຮັບຮອງ ແລະ ຝຶກອົບຮົມ ໃຫ້ແກ່ຜູ້ພິພາກສາທີ່ມີຢູ່ (ສົນທິສັນຍາ ACTIP, ມາດຕາ 16.6).



4. ການສະໜອງຂໍ້ມູນ ແລະ ການບໍລິການ ໃຫ້ແກ່ຜູ້ຖືກເຄາະຮ້າຍ

ການເຂົ້າເຖິງຂໍ້ມູນ ແລະ ການບໍລິການທີ່ດີ ແມ່ນຈຸດເລີ່ມຕົ້ນທີ່ສຳຄັນ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຂະບວນການຍຸຕິທຳທາງອາຍາ. ດັ່ງນັ້ນ ຈຶ່ງມີຄວາມສຳຄັນ ສຳລັບຂະແໜງຍຸຕິທຳ, ລວມທັງສານຕ້ອງມີມາດຕະການເພື່ອສະໜອງຂໍ້ມູນໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການບໍລິການເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໄດ້ນຳສະເໜີຄຳຄິດຄຳເຫັນໃນຂັ້ນຕອນຂອງການດຳເນີນຄະດີທາງອາຍາ. ສະນັ້ນ, ການສະໜອງຂໍ້ມູນ ແລະ ການບໍລິການໃຫ້ແກ່ຜູ້ຖືກເຄາະຮ້າຍຢູ່ສານຕ້ອງປະຕິບັດຫຼັກການພື້ນຖານ ດັ່ງນີ້:

1. ສານ ຄວນສະໜອງຂໍ້ມູນ ແລະ ເອກະສານທີ່ເໝາະສົມໃນຫຼາຍໆຮູບແບບ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນແບບງ່າຍດາຍ, ບໍ່ນຳໃຊ້ຄຳສັບກົດໝາຍ ແລະເປັນພາສາທີ່ເຂົ້າໃຈໄດ້ງ່າຍກ່ຽວກັບ:


- ການຄ້າມະນຸດແມ່ນຫຍັງ; ຂະບວນການຍຸຕິທຳທາງອາຍາລວມທັງສິດ ແລະ ພັນທະທາງດ້ານກົດໝາຍ ຂອງຜູ້ຖືກເຄາະຮ້າຍ, ການມີສ່ວນຮ່ວມ ຫຼື ບໍ່ມີສ່ວນຮ່ວມ, ການບໍລິການໃຫ້ແກ່ຜູ້ຖືກເຄາະຮ້າຍ ໃນໄລຍະເວລາຂອງການພິຈາລະນາຄະດີການຄ້າມະນຸດ. (ສົນທິສັນຍາ ACTIP, ມາດຕາ 14.9 ແລະ 14.10 (b));

- ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ເພື່ອໃຫ້ຜູ້ຖືກເຄາະຮ້າຍເຂົ້າໃຈວ່າ ເຂົາເຈົ້າຈະບໍ່ມີຄວາມຮັບຜິດ ຊອບທາງອາຍາ ຫຼື ທາງບໍລິຫານ ສຳລັບການກະທຳຜິດກົດໝາຍ ທີ່ເຂົາເຈົ້າເປັນຜູ້ກະທຳ, ຖ້າຫາກການກະທຳນັ້ນ ກ່ຽວພັນໂດຍກົງກັບການຄ້າມະນຸດ (ສົນທິສັນຍາ ACTIP, ມາດຕາ 14.7);


- ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີສິດຂໍຄ່າເສຍຫາຍ/ຄ່າຊົດເຊີຍ (ຖ້າມີ) ສຳລັບການສູນເສຍ ແລະ ຄວາມບອບຊ້ຳທາງດ້ານຈິດໃຈຂອງເຂົາເຈົ້າ ພ້ອມທັງຂັ້ນຕອນການສະເໜີ (ສົນທິສັນຍາ ACTIP, ມາດຕາ 14.13).

2. ຈ່າສານ ຈະເປັນຜູ້ຕິດຕໍ່ກັບຜູ້ຖືກເຄາະຮ້າຍ ແລະ ພະຍານ ເພື່ອລາຍງານຄວາມຄືບໜ້າຂອງ

ຄະດີ ແລະ ສະໜອງຂໍ້ມູນຫຼັກຖານ, ຊ່ວຍເຫຼືອ ແລະ ການບໍລິການຕ່າງໆ ໃຫ້ແກ່ຜູ້ຖືກເຄາະຮ້າຍ ແລະ ພະຍານ (ສົນທິສັນຍາ ACTIP, ມາດຕາ 16.1, ມາດຕາ 62 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ).



ຕົວຢ່າງ 1: ຂໍ້ມູນສຳລັບຜູ້ຖືກເຄາະຮ້າຍ: ໃນ ສປປ ລາວ, ຄອນສະແດງໂປສະເຕີ້ຢູ່ສານ ແລະ ສະໜອງຂໍ້ມູນຂ່າວສານໃຫ້ແກ່ຜູ້ຖືກເຄາະຮ້າຍ ແລະ ພະຍານ ກ່ຽວກັບແຜນຜັງຂອງຫ້ອງພິຈາລະນາຄະດີ/ຫ້ອງປະຊຸມສານ ແລະ ການອະທິບາຍຫຍໍ້ບົດບາດຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ເຊັ່ນ: ຄະນະສານ, ຈ່າສານ, ໄອຍະການ, ໂຈດທາງແພ່ງ, ຈຳເລີຍ ແລະ ບຸກຄົນ ອື່ນໆ.



ຕົວຢ່າງ 2: ຂໍ້ມູນຂ່າວສານ ກ່ຽວກັບຂະ ບວນການພິຈາລະນາຄະດີ - ຄອນມີຂໍ້ມູນ ກ່ຽວກັບຂະບວນການພິຈາລະນາຄະດີໃນຫຼາຍຮູບແບບ ເຊັ່ນ: ວີດີໂອ, ເວັບໄຊທ໌, ສື່ສັງຄົມ ແລະ ອື່ນໆ ເພື່ອໃຫ້ຜູ້ຖືກເຄາະຮ້າຍໄດ້ຮັບຮູ້ຂໍ້ມູນ ກ່ຽວກັບຂະບວນການພິຈາລະນາຄະດີອາຍາແຕ່ຕົ້ນ.



ຕົວຢ່າງ3: ມີວີດີໂອອອນໄລນ໌ ກ່ຽວກັບ ບົດບາດ ຂອງພະຍານໃນຄະດີ ເພື່ອໃຫ້ຂໍ້ມູນຂ່າວສານແກ່ພະຍານ ເພື່ອຫຼຸດຜ່ອນຄວາມຢ້ານກົວ ທີ່ເຂົາເຈົ້າອາດຈະມີໃນເວລາຂຶ້ນສານ. ວີດີໂອນີ້ ແມ່ນສິ່ງຜ່ານໜ້າເຟສບຸກຂອງຜູ້ຖືກເຄາະຮ້າຍ.



ຕົວຢ່າງ 4: ຂໍ້ມູນຂ່າວສານ ສຳລັບຜູ້ຖືກເຄາະຮ້າຍ ໃນເວລາຂຶ້ນສານ ເພື່ອຊ່ວຍຜູ້ຖືກເຄາະຮ້າຍຈາກອາຊະຍາກຳໃນເວລາຂຶ້ນສານ, ວີດີໂອສະແດງແຜນຜັງຂອງສານ ຊຶ່ງອະທິບາຍຂະບວນການໃນການພິຈາລະນາຄະດີ ແລະ ແນວຄວາມຄິດສຳຄັນຕ່າງໆ ເຊັ່ນ: ຫຼັກຖານທີ່ສຳຄັນ, ການຊັກຖາມ ແລະ ການເອົາຄຳໃຫ້ການ.

ຕົວຊີ້ວັດທີ 5 ການຟື້ນຟູສິດຜູ້ຖືກເຄາະຮ້າຍ

5. ການຟື້ນຟູສິດຜູ້ຖືກເຄາະຮ້າຍ

ຜູ້ຖືກເຄາະຮ້າຍ ຕ້ອງໄດ້ຮັບການຊ່ວຍເຫຼືອແບບພິເສດ ທາງດ້ານອັດຖຸ ແລະ ຈິດໃຈ ຊຶ່ງການຊ່ວຍເຫຼືອທີ່ມີປະສິດທິພາບ, ຜູ້ຖືກເຄາະຮ້າຍຕ້ອງມີການຮ່ວມມືກັບຫຼາຍພາກສ່ວນ ເພື່ອແກ້ໄຂຄວາມຕ້ອງການສະເພາະຂອງຜູ້ຖືກເຄາະຮ້າຍ ລວມທັງການຊ່ວຍເຫຼືອໃຫ້ຄຳປຶກສາທາງດ້ານກົດໝາຍ.


ການດຳເນີນຄະດີການຄ້າມະນຸດຢູ່ສານ ສານຕ້ອງປະສານສົມທົບກັບອົງການຈັດຕັ້ງທີ່ບໍ່ສັງກັດລັດ ແລະ ອົງການຈັດຕັ້ງທາງສັງຄົມ, ເພື່ອເຮັດໃຫ້ຜູ້ຖືກເຄາະຮ້າຍໄດ້ຮັບການຊ່ວຍເຫຼືອຢ່າງມີປະສິດທິພາບ ແລະ ເຂົ້າເຖິງການບໍລິການໃນທຸກດ້ານ. ການຟື້ນຟູທາງດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມຂອງຜູ້ຖືກເຄາະຮ້າຍ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

- ການຟື້ນຟູສິດຜູ້ຖືກເຄາະຮ້າຍໃນເບື້ອງຕົ້ນ ແມ່ນສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ຕຳຫຼວດ, ເມື່ອເຈົ້າໜ້າທີ່ສາມາດກອບກູ້ເອົາຜູ້ຖືກເຄາະຮ້າຍມາແລ້ວ ສິ່ງທຳອິດຕ້ອງຟື້ນຟູສິດຜູ້ຖືກເຄາະຮ້າຍ ໂດຍມອບໃຫ້ນັກສັງຄົມສົງເຄາະ, ນັກຈິດຕະວິທະຍາ, ສະຫະພັນແມ່ຍິງ ແລະ ອົງການອື່ນໆ ທີ່ກ່ຽວຂ້ອງເຂົ້າໄປຊ່ວຍເຫຼືອ ໂດຍສະເພາະ ການຟື້ນຟູທາງດ້ານຮ່າງກາຍ, ຈິດໃຈ, ສິດອື່ນໆ ພ້ອມທັງຈັດຫາທີ່ຢູ່ອາໃສ່ໃຫ້ຜູ້ກ່ຽວໂດຍໄວ ແລະ ນຳເຂົ້າສູ່ຂະບວນການຍຸຕິທຳ ເພື່ອປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໄດ້ຮັບຄວາມເປັນທຳ, ທົດແທນຄ່າເສຍຫາຍ ຫຼື ຄ່າຊົດເຊີຍ ຢ່າງເໝາະສົມ, ກັບຄືນສູ່ຄອບຄົວ ແລະ ດຳລົງຊີວິດໃນສັງຄົມຢ່າງບໍ່ມີປົມດ້ອຍ.

- ໃນກໍລະນີ ຄະດີມາຮອດສານ ຖ້າຜູ້ຖືກເຄາະຮ້າຍບໍ່ໄດ້ຮັບການຟື້ນຟູສິດຢ່າງເຕັມທີ່ ຜູ້ກ່ຽວມີສິດຮ້ອງຂໍໃຫ້ສານພິຈາລະນາກ່ຽວກັບການຟື້ນຟູສິດດັ່ງກ່າວຄືນຕື່ມອີກ ແລະ ສານຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕອບສະໜອງສິດທີ່ສູນເສຍ ຫຼື ຖ້າຫາກມີຄວາມຈຳເປັນ ສານອາດຈະຮຽກພາກສ່ວນທີ່ກ່ຽວຂ້ອງມາຊີ້ແຈງ ຫຼື ຢັ້ງຢືນກ່ຽວກັບການຟື້ນຟູສິດດັ່ງກ່າວ ແລ້ວສານຈຶ່ງພິຈາລະນາໃຫ້ຕາມຄວາມເໝາະສົມ.

- ໃນກໍລະນີ ທີ່ສານຫາກເຫັນວ່າ ຜູ້ຖືກເຄາະຮ້າຍບໍ່ໄດ້ຮັບການຟື້ນຟູສິດຢ່າງເຕັມສ່ວນ ສານຕ້ອງປະສານສົມທົບ ແລະ ປຶກສາຫາລືກັບຂະແໜງການທີ່ກ່ຽວຂ້ອງ ໃນການບໍລິການຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊັ່ນ: ການໃຫ້ຄຳປຶກສາທາງດ້ານກົດໝາຍ, ການໃຫ້ບໍລິການທາງການແພດ, ການຈັດສະຖານທີ່ພັກອາໃສ, ການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ສະໜອງເອກະສານທາງດ້ານກົດໝາຍ. ໃນເວລາດຳເນີນຄະດີ ສານຕ້ອງຄົ້ນຄວ້າພິຈາລະນາການທົດແທນຄ່າເສຍຫາຍ, ຄ່າຊົດເຊີຍ ແລະ ສິດອື່ນໆ ຢ່າງເໝາະສົມຂອງຜູ້ຖືກເຄາະຮ້າຍຄວນຈະໄດ້ຮັບ.





ຕົວຢ່າງ: ປຶ້ມຄູ່ມືແນະນຳການນຳໃຊ້ກົດໝາຍອ່ຳດ້ວຍ ການດຳເນີນຄະດີເດັກ ທີ່ໄດ້ແນະນຳຂັ້ນຕອນ, ວິທີການ, ຫຼັກການໃນການດຳເນີນຄະດີເດັກ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ.


ຕົວຢ່າງ: ເອກະສານ ສຳລັບພະຍານ ແລະ ຜູ້ຖືກເຄາະຮ້າຍທີ່ເປັນເດັກ ຄູ່ມືສະຫະປະຊາຊາດ ກ່ຽວກັບຄວາມຍຸຕິທຳ ທີ່ກ່ຽວຂ້ອງກັບຜູ້ຖືກເຄາະຮ້າຍທີ່ເປັນເດັກ ແລະ ພະຍານຈາກອາຊະຍາກຳ (ສະບັບທີ່ຄຳນຶງເຖິງເດັກ) ອະທິບາຍໃນຮູບແບບງ່າຍດາຍ ແລະ ເໝາະສົມກັບເດັກ, ສິ່ງໃດທີ່ຄວນເຮັດ ແລະ ປະຊາຊົນຄວນປະຕິບັດແນວໃດ ໃນສະຖານະການສະເພາະໃດໜຶ່ງ ເພື່ອຮັບປະ ກັນໃຫ້ເດັກ ທີ່ໄດ້ຮັບອັນຕະລາຍຈາກອາຊະຍາກຳ ແລະ ເດັກທີ່ພົບເຫັນອັນຕະລາຍ ອື່ນໆ ໄດ້ຮັບການປົກປ້ອງ ແລະຖືກປະຕິບັດຢ່າງເປັນທຳ ເມື່ອພວກເຂົາເລົ່າເລື່ອງຂອງເຂົາເຈົ້າຢູ່ໃນສານ, ເອກະສານດັ່ງກ່າວ ຍັງເປັນການຊ່ວຍປົກປ້ອງເດັກ ເມື່ອພວກເຂົາເວົ້າກັບເຈົ້າໜ້າທີ່ຕຳຫຼວດ, ນັກກົດໝາຍ/ທະນາຍຄວາມ, ນັກສັງຄົມສົງເຄາະ ແລະ ຄົນອື່ນທີ່ເຂົາເຈົ້າພົບກ່ອນ ແລະ ຫຼັງເຂົາເຈົ້າຂຶ້ນສານ.

6. ການໃຫ້ບໍລິການທາງການແພດ ແລະ ນິຕິເວດ

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມຈຳເປັນຕ້ອງໄດ້ຮັບການຊ່ວຍເຫຼືອທາງດ້ານການແພດ ເນື່ອງຈາກວ່າ ເຂົາເຈົ້າໄດ້ຮັບບາດເຈັບທາງດ້ານຮ່າງກາຍ, ມີຄວາມສ່ຽງທີ່ອາດຈະຕິດເຊື້ອພະຍາດ ຫຼື ຕິດຢາເສບຕິດ ອັນເນື່ອງມາຈາກການຖືກບັງຄັບໃຫ້ເສບຢາ ຊຶ່ງອາດຈະມີບັນຫາທາງດ້ານສຸຂະພາບຈິດເຮັດໃຫ້ມີຜົນກະທົບທາງດ້ານຮ່າງກາຍ ແລະ ຄວາມບອບຊ້ຳທາງດ້ານຈິດໃຈຈາກເຫດການທີ່ພວກເຂົາປະເຊີນຈາກການຄ້າມະນຸດ.

ຜູ້ພິພາກສາ ຕ້ອງມີຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບການເກັບກຳຫຼັກຖານທາງ ນິຕິເວດທີ່ເໝາະສົມ ແລະ ຄວນໄດ້ຮັບການຝຶກອົບຮົມກ່ຽວກັບທາງການແພດ ແລະ ນິຕິເວດຂອງຫຼັກຖານປະເພດນີ້.[6] ມີການແລກປ່ຽນຂໍ້ມູນຂ່າວສານທາງການປະຈຳປີ ລະຫວ່າງ ສະຖາບັນຕ້ານການຄ້າມະນຸດພາກພື້ນ ແລະ ສະຖາບັນນິຕິເວດສະເພາະທາງໃນຂົງເຂດອາຊຽນ ເພື່ອພັດທະນາຄວາມຊຳນານງານໃນພາກພື້ນ ແລະ ສົ່ງເສີມການປະສານສົມທົບ (ສົນທິ ສັນຍາ ATIP, ມາດຕາ 12 (g).

ໃນການດຳເນີນຄະດີການຄ້າມະນຸດ ຜູ້ພິພາກສາ ຕ້ອງໄດ້ກວດກາ ແລະ ຄົ້ນຄ້ວາວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຮັບຜົນກະທົບທາງດ້ານຮ່າງກາຍ (ການໄດ້ຮັບບາດເຈັບ, ບອບຊ້ຳພາຍໃນ ຫຼື ພາຍນອກ, ມັນສະໝອງ, ເສຍອົງຄະ, ພິການ, ຕິດເຊື້ອພະຍາດ, ເປັນບ້າ ຫຼື ເສຍຊີວິດ), ຜົນກະທົບທາງດ້ານຈິດໃຈ (ການປ່ຽນແປງດ້ານອາລົມເຊັ່ນ: ຄວາມກັງວົນຫຼາຍເກີນໄປ ໃຈຮ້າຍຮຸນແຮງ, ຊຶມເສົ້າ, ຢ້ານກົວ, ເຫັນພາບຫຼອນ, ຄວບຄຸມຕົນເອງບໍ່ໄດ້, ມີປົມດ້ອຍຕິດຕົວ, ເສຍຈິດ, ເສຍໃຈ ແລະ ອື່ນໆ) ແລະ ຜົນກະທົບທາງເພດ (ອະໄວຍະວະສືບພັນຖືກທຳລາຍ, ຕິດເຊື້ອພະຍາດຮ້າຍແຮງເປັນຕົ້ນ ເຮສ ໄອວີ (HIV/AIDs), ໄອຮັດຕັບ, ຖືພາໂດຍບໍ່ຕັ້ງໃຈ ແລະ ອື່ນໆ)[7]. ຊຶ່ງໃນໄລຍະຜ່ານມາເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ອົງການໄອຍະການປະຊາຊົນ ຫຼື ພາກສ່ວນທີ່ກ່ຽວຂ້ອງໄດ້ນຳເອົາຜູ້ຖືກເຄາະຮ້າຍໄປປິ່ນປົວ, ບຳບັດ ແລະ ການບໍລິການທາງດ້ານການແພດແລ້ວ ຫຼື ບໍ່



[6]See also WHO *Guidelines for Medico-legal Care forVictims of Sexual Violence at:* www.who.int/violence_injury_prevention/publications/violence/med_ leg_guidelines/en/

[7]ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ປີ 2015, ມາດຕາ 14, 15 ແລະ 16

ການບໍລິການທາງດ້ານການແພດແລ້ວ ຫຼື ບໍ່ ໃນກໍລະນີ ຫາກບໍ່ໄດ້ຮັບການປິ່ນປົວ ສານຕ້ອງໄດ້ອອກຄຳສັ່ງນຳເອົາຜູ້ຖືກເຄາະຮ້າຍມາປິ່ນປົວຢ່າງຮີບດ່ວນ.

ຜູ້ພິພາກສາ ຕ້ອງໄດ້ກວດກາຫຼັກຖານທາງດ້ານນິຕິວິທະຍາ ກ່ຽວກັບໃບຢັ້ງຢືນທາງການແພດ ຫຼື ຊ່ຽວຊານ ທີ່ຜູ້ຖືກເຄາະຮ້າຍໄດ້ຮັບຜົນກະທົບທາງດ້ານ ຮ່າງກາຍ, ຈິດໃຈ, ເພດ ແລະ ຜົນກະທົບອື່ນໆ, ໃນກໍລະນີ ບໍ່ມີການຢັ້ງຢືນ ຜູ້ພິພາກສາທີ່ຮັບຜິດຊອບຄະດີ ຕ້ອງໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄືນເພາະວ່າ ບັນຫາດັ່ງກ່າວ ຈະມີຜົນຕໍ່ການພິຈາລະນາຄະດີຂອງສານ.



7. ຜູ້ຖືກເຄາະຮ້າຍທີ່ເປັນເດັກ

ເດັກ ໝາຍເຖິງ ບຸກຄົນທີ່ມີອາຍຸຕ່ຳກວ່າ 18 ປີ ຕາມທີ່ໄດ້ກຳນົດໃນສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍ ແລະ ມາດຕາ 3 ຂໍ້ 1 ແລະ 5 ຂອງກົດໝາຍວ່າດ້ວຍການດຳເນີນຄະດີເດັກ ສະບັບເລກທີ 41/ສພຊ, ລົງວັນທີ 20 ທັນວາ 2013.

ເດັກ ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຜົນກະທົບທາງດ້ານຮ່າງກາຍ ແລະ ຈິດໃຈ ພ້ອມທັງມີຄວາມສ່ຽງໃນການຖືກຂູດຮີດເພີ່ມຂຶ້ນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ຮັບການຊ່ວຍ ເຫຼືອຕ່າງ ຈາກຜູ້ໃຫຍ່ ໂດຍສະ ເພາະ ແມ່ນການຊ່ວຍເຫຼືອທາງດ້ານກົດໝາຍ, ນະໂຍບາຍ ແລະ ຜົນປະໂຫຍດ ທີ່ດີທີ່ສຸດຂອງເດັກ ໃຫ້ໄດ້ຮັບການພິຈາລະນາເປັນອັນດັບທຳອິດ ໃນທຸກການດຳເນີນຄະດີທີ່ກ່ຽວ ຂ້ອງກັບເດັກທີ່ຖືກຄ້າມະນຸດ, ສະນັ້ນ ການດຳເນີນຄະດີການຄ້າມະນຸດ ຜູ້ຖືກເຄາະຮ້າຍທີ່ເປັນເດັກ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີເດັກ ດັ່ງນີ້:

- ການສືບສວນ-ສອບຖາມເດັກ ທີ່ເປັນຜູ້ຖືກເຄາະຮ້າຍ ຕ້ອງໃຫ້ມີ ພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ປົກ ປ້ອງອື່ນ ເຂົ້າຮ່ວມນຳທຸກຄັ້ງ;

- ການສອບຖາມເດັກນັ້ນ ຕ້ອງໃຊ້ຄຳຖາມທີ່ເຂົ້າໃຈງ່າຍ, ມີລັກສະນະເປັນກັນເອງ ໂດຍບໍ່ໃຫ້ເດັກເກີດຄວາມຢ້ານກົວ, ຫຼີກເວັ້ນ ຄຳຖາມແບບກົດດັນ, ແບບຊີ້ນຳ ຫຼື ຄຳຖາມປິດ, ຊັກຈູງ ແລະ ບໍ່ໃຫ້ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ທຸບຕີ, ທໍລະມານ ຫຼື ນຳໃຊ້ມາດຕະການອື່ນທີ່ບໍ່ຖືກຕ້ອງ ຕາມກົດໝາຍ, ການສອບຖາມເດັກແຕ່ລະຄັ້ງ ໃຫ້ມີການພັກຜ່ອນ ແຕ່ໃຊ້ເວລາລວມບໍ່ໃຫ້ເກີນເກົ້າ ສິບນາທີ, ຖ້າເດັກທີ່ຖືກສອບຖາມເປັນເພດຍິງ ຕ້ອງໃຫ້ເພດດຽວກັນເປັນຜູ້ສອບຖາມ ຫຼື ໃຫ້ມີເພດ ຍິງເຂົ້າຮ່ວມນຳ[8];

- ການສຳພາດເດັກ ຜູ້ທີ່ຖືກເຄາະຮ້າຍ ແລະ ເດັກຜູ້ທີ່ເປັນພະຍານ ຕ້ອງໃຊ້ວິທີການທີ່ນຸ້ມນວນ ແລະ ເປັນມິດຕໍ່ເດັກ, ເຂົ້າໃຈງ່າຍເໝາະສົມກັບອາຍຸ ແລະ ຄວາມສາມາດຂອງເດັກ ໃນການຈຳແນກ ຄວາມຖືກ-ຄວາມຜິດ ແລະ ຕ້ອງດຳເນີນໃນສະຖານທີ່ເໝາະສົມ[9];

---

[8]ກົດໝາຍວ່າດ້ວຍການດຳເນີນຄະດີເດັກ ຂອງ ສປປ ລາວ ມາດຕາ 51.

[9]ກົດໝາຍວ່າດ້ວຍການດຳເນີນຄະດີເດັກ ຂອງ ສປປ ລາວ ມາດຕາ 52.

- ຕ້ອງສ້າງແຜນກະກຽມຄວາມພ້ອມ ໃຫ້ແກ່ພະຍານທີ່ເປັນເດັກ ເພື່ອໃຫ້ເຂົາເຈົ້າຄຸ້ນເຄີຍກັບຜູ້ພິພາກສາໃນການດຳເນີນຄະດີກ່ອນທີ່ຈະເຂົ້າມາສານ ເພື່ອສະໜອງຂໍ້ມູນຫຼັກຖານ;

- ຕ້ອງໃຫ້ມີຜ້າກັ້ງ ຫຼື ແຜ່ນກຳບັງທີ່ເປັນສ່ວນຕົວ ລະຫວ່າງ ເດັກທີ່ເປັນຜູ້ຖືກເຄາະຮ້າຍ, ພະຍານ ແລະ ຈຳເລີຍໃນທີ່ປະຊຸມສານ, ຄະນະສານຕັດສິນ ຕ້ອງນຸ່ງເຄື່ອງສຸພາບ ບໍ່ນຸ່ງຊຸດປະຊຸມສານທົ່ວໄປ[10];

- ການຈັດຫ້ອງປະຊຸມສານ ແລະ ຂັ້ນຕອນຕ່າງໆ ທີ່ບໍ່ເປັນການຂົ່ມຂູ່ພະຍານທີ່ເປັນເດັກ;

- ຫ້ອງປະຊຸມສານຕ້ອງເຮັດແບບປິດລັບ ໃນກໍລະນີຄະດີທີ່ກ່ຽວຂ້ອງ ກັບຜູ້ຖືກເຄາະຮ້າຍ, ພະຍານ ຫຼື ຈຳເລີຍ ທີ່ເປັນເດັກ;

- ອາດຈະນຳໃຊ້ຄົນກາງ ເພື່ອຊັກຖາມຜູ້ຖືກເຄາະຮ້າຍທີ່ເປັນເດັກ ເຊັ່ນ: ນັກສັງຄົມສົງເຄາະ,ຜູ້ຊ່ຽວຊານເດັກ, ທະນາຍຄວາມ, ຜູ້ປົກຄອງ ຫຼື ຜູ້ປົກປ້ອງຜູ້ຖືກເຄາະຮ້າຍ ໃນການພິຈາລະນາຄະດີ;

- ການດຳເນີນການພິຈາລະນາຄະດີ ຕ້ອງຮັບປະກັນຜົນປະໂຫຍດສູງສຸດຂອງເດັກ.

ນອກຈາກນີ້, ການດຳເນີນຄະດີການຄ້າມະນຸດ ຜູ້ຖືກເຄາະຮ້າຍທີ່ເປັນເດັກ ຕາມຫຼັກການສົນທິສັນຍາ ແລະ ພາກປະຕິບັດສາກົນ ປະຕິບັດ ດັ່ງນີ້:

- ການໃຫ້ຂໍ້ມູນຕ້ອງຄຳນຶງເຖິງເດັກ ແລະ ຄວາມເໝາະສົມກັບໄວອາຍຸຂອງເດັກ ກ່ຽວກັບຂະບວນການ ພິຈາລະນາຄະດີ, ສິດ ແລະ ບົດບາດຂອງເດັກ ໃນການເຂົ້າຮ່ວມການດຳເນີນຄະດີ, ຄວາມຄາດຫວັງຂອງສານທີ່ມີຕໍ່ເດັກ ແລະ ຄວາມພະຍາຍາມແກ້ໄຂຂໍ້ກັງວົນໃດໆຂອງເດັກ;

- ຕ້ອງອະນຸຍາດໃຫ້ຜູ້ຖືກ ເຄາະຮ້າຍ ແລະ ພະຍານທີ່ເປັນເດັກ ໃຫ້ການ ໂດຍຜ່ານກ້ອງວີດີໂອທາງໄກ, ຖ້າມີຄວາມຈຳເປັນສາມາດນຳເອົາເດັກມາເຂົ້າຮ່ວມການພິຈາລະນາຄະດີ ໃນການຊັກຖາມ ຫຼື ສຳພາດໂດຍຊ້ອງໜ້ານຳໄດ້;

- ຖ້າມີເງື່ອນໄຂສານຕ້ອງອະນຸຍາດໃຫ້ມີການເປີດເທບວີດີໂອທີ່ບັນທຶກໄວ້ລ່ວງໜ້າ ຂອງຄຳໃຫ້ການຜູ້ຖືກເຄາະຮ້າຍ ແລະ ພະຍານທີ່ເປັນເດັກຢູ່ໃນສານ;

- ປົກປ້ອງຄວາມເປັນສ່ວນຕົວຂອງເດັກ ໂດຍບໍ່ໃຫ້ມີການລະບຸຕົວຕົນ ຂອງຜູ້ຖືກເຄາະຮ້າຍ, ພະຍານ ຫຼື ຈຳເລີຍທີ່ເປັນເດັກ (ສົນທິສັນຍາ ACTIP, ມາດຕາ 14,5, 14,6 ແລະ 16.7);


- ຕ້ອງໃຫ້ຂໍ້ມູນແກ່ເດັກ ກ່ຽວກັບບົດບາດ ແລະ ຂອບເຂດສິດຂອງເຂົາເຈົ້າ, ກຳນົດເວລາ ແລະ ຂັ້ນຕອນການດຳເນີນຄະດີ (ສົນທິສັນຍາ ACTIP, ມາດຕາ 16.3).

ຕົວຢ່າງ: ການຄຳນຶງເຖິງຜູ້ຖືກເຄາະຮ້າຍ ທີ່ເປັນພະຍານ ແລະ ເດັກ:

1) ເອກະສານສຳລັບເດັກ ກ່ຽວກັບການຂຶ້ນສານ ການສ້າງປຶ້ມຄູ່ມື ສຳລັບເດັກ ທີ່ຈະເຂົ້າຮ່ວມໃນການດຳເນີນຄະດີຢູ່ສານ ຕ້ອງປະກອບຂໍ້ມູນທີ່ເໝາະສົມກັບໄວອາຍຸຂອງເດັກ, ຊຶ່ງໃນປຶ້ມຄູ່ມື ຕ້ອງເວົ້າລະອຽດວ່າ ອັນໃດເປັນການດຳເນີນຄະດີຂອງສານ, ອັນໃດທີ່ເດັກສາມາດຮັບຮູ້ ແລະ ມີຄວາມຄາດຫວັງໃນເວລາຂຶ້ນສານ ແລະ ມີອັນໃດແດ່ທີ່ສານຕ້ອງການຈາກເດັກ. ປຶ້ມຄູ່ມືດັ່ງກ່າວ ຈະສາມາດ

[10] ກົດໝາຍວ່າດ້ວຍການດຳເນີນຄະດີເດັກ ຂອງ ສປປ ລາວ ມາດຕາ 84.

ຊ່ວຍໃຫ້ເດັກກະກຽມສຳລັບການພິຈາລະນາຄະດີ ແລະ ທັງຊ່ວຍໃຫ້ໄດ້ຫຼັກຖານທີ່ດີທີ່ສຸດ. ນອກຈາກນັ້ນ ຍັງມີວິດີໂອທີ່ອອກແບບສຳລັບເດັກ ທີ່ຊ່ວຍໃຫ້ເດັກເຂົ້າໃຈຂັ້ນຕອນຕ່າງໆຂອງສານທີ່ເດັກຈະປະເຊີນໜ້າໃນເວລາເຂົ້າຮ່ວມການດຳເນີນຄະດີຂອງສານ.[11]




(ຕົວຢ່າງ: ຜູ້ຖືກເຄາະຮ້າຍທີ່ເດີນທາງມາສານ)

2) ການສື່ສານກັບເດັກຢູ່ໃນສານ ສ້າງປຶ້ມຄູ່ມືວິທີການເວົ້າ ແລະ ຊັກຖາມກັບເດັກ ໃນຫ້ອງປະຊຸມສານ. ໂດຍປຶ້ມດັ່ງກ່າວ ຕ້ອງໃຫ້ຕົວຢ່າງກ່ຽວກັບວິທີຖາມ ແລະ ວິທີທີ່ບໍ່ຄວນຖາມເດັກໃນທີ່ປະຊຸມສານ.

3) ການສຳພາດເດັກທີ່ເປັນພະຍານ ຄວນນຳໃຊ້ວິດີໂອທາງໄກຫຼາຍກວ່າຈະປະຕິບັດຢູ່ໃນຫ້ອງປະຊຸມສານ. ການສະແດງຫຼັກຖານໃນທີ່ປະຊຸມສານ ຈະຕ້ອງແຍກຫ້ອງສະເພາະໃນການສຳພາດເດັກທີ່ເປັນພະຍານ ແລະ ຈຳເລີຍ ພ້ອມທັງໃຫ້ມີ ພໍ່ແມ່, ຜູ້ປົກຄອງ, ຜູ້ຄຸ້ມຄອງ, ຜູ້ປົກປ້ອງ, ທະນາຍຄວາມ ຫຼື ນັກຈິດຕະວິທະຍາ-ສັງຄົມສົງເຄາະເຂົ້າຮ່ວມໃນທີ່ປະຊຸມສານ.

[11]https://www.judiciary.gov.sg/docs/default-source/attending-court-docs/sara_goes_to_court_english.pdf

4) ການຈັດຫ້ອງປະຊຸມສານສຳລັບເດັກ ຜູ້ພິພາກສາຕ້ອງໄດ້ກຳນົດຫ້ອງປະຊຸມສານ ສຳລັບເດັກ ໃນຮູບແບບທີ່ເປັນມິດ 'ເພື່ອຜົນປະໂຫຍດທີ່ດີທີ່ສຸດຂອງເດັກ' ແລະ ການນຸ່ງຖືຂອງຜູ້ພິພາກສາ ກໍ ໃຫ້ນຸ່ງເຄື່ອງສຸພາບຮຽບຮ້ອຍທຳມະດາ ໂດຍບໍ່ໃຫ້ນຸ່ງເຄື່ອງແບບຂອງສານ. ໃນຄະດີການລ່ວງລະເມີດ ທາງເພດຂອງເດັກ, ຄວາມຮຸນແຮງ ຫຼື ການຄ້າມະນຸດ ສານຕ້ອງໄດ້ດຳເນີນການພິຈາລະນາຄະດີແບບ ປິດລັບ.





8. ຜູ້ຖືກເຄາະຮ້າຍ ທີ່ເປັນຄົນພິການ.

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດກາຍເປັນຄົນພິການຈາກການທາລຸນທາງຮ່າງກາຍ, ການ ຈາກຜູ້ຄ້າມະນຸດ, ຄົນພິການ ມັກຈະປະເຊີນກັບຄວາມບົກຜ່ອງທາງດ້ານຮ່າງກາຍ, ການ ສື່ສານ ແລະ ທັດສະນະຄະຕິ ໃນການເຂົ້າເຖິງຂະບວນການຍຸຕິທຳ ຫຼື ຂະບວນການດຳ ເນີນຄະດີ ເຊັ່ນ: ຄົນພິການ ອາດຖືກເບິ່ງຂ້າມໃນການເປັນພະຍານທີ່ບໍ່ໜ້າເຊື່ອຖືໂດຍສະ ເພາະບຸກຄົນທີ່ມີບັນຫາການເຄື່ອນໄຫວທາງດ້ານຮ່າງກາຍໃນການເຂົ້າເຖິງຂະບວນການ ດຳເນີນຄະດີ ແລະ ບາງສະຖານທີ່ ທີ່ບໍ່ມີສິ່ງອຳນວຍຄວາມສະດວກໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ເປັນຄົນ ພິການ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ລະບຸຕົວຕົນຂອງຄົນພິການແຕ່ເບື້ອງຕົ້ນ ພ້ອມທັງວາງ ແຜນ ແລະ ຂໍ້ກຳນົດ ເພື່ອຮັບປະກັນໃຫ້ຄົນພິການໄດ້ມີສ່ວນຮ່ວມຢ່າງຈິງຈັງ ໃນທຸກຂັ້ນຕອນການດຳ ເນີນຄະດີ ແລະ ອື່ນໆ. ນອກຈາກນີ້, ສານຕ້ອງອຳນວຍຄວາມສະດວກໃນການເຂົ້າຮ່ວມການດຳ ເນີນ ຄະດີ ຕໍ່ກັບຜູ້ຖືກເຄາະຮ້າຍ, ພະຍານທີ່ເປັນຄົນພິການ. ຕາມຫຼັກການສົນທິສັນຍາສາ ແລະ ພາກປະຕິ

ບັດສາກົນ ຜູ້ພິພາກສາ ແລະ ພະນັກງານຂອງສານ ໃນເວລາດຳເນີນຄະດີ ຕ້ອງປະຕິບັດຕາມຫຼັກການດັ່ງນີ້:

- ການເຂົ້າມາສານ ແລະ ຫ້ອງປະຊຸມສານຂອງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດທີ່ເປັນຄົນພິການ ເຊັ່ນ: ຜູ້ຖືກເຄາະຮ້າຍທີ່ຈຳເປັນຕ້ອງໃຊ້ລໍ້ສຳລັບຄົນພິການ ແມ່ນໃຫ້ພິຈາລະນາຄະດີຢູ່ຊັ້ນລຸ່ມ ຫຼື ການສະເໜີຫຼັກຖານໃນຮູບແບບທາງໄກ ຫຼື ນຳໃຊ້ຜ່ານວີດີໂອ, ຫ້ອງປະຊຸມມີຄວາມສະດວກ ສຳລັບຜູ້ຖືກເຄາະຮ້າຍ ທີ່ນຳໃຊ້ລໍ້ສຳລັບຄົນພິການ ໃຫ້ເໝາະສົມກັບບ່ອນຢືນຂອງພະຍານ;
- ໃນຫ້ອງປະຊຸມສານ ຫຼື ຢູ່ໃນສານ ຕ້ອງບໍ່ມີສິ່ງກີດຂວາງສຳລັບພະຍານທີ່ມີຄວາມບົກຜ່ອງທາງສາຍຕາ ແລະ ບັນຫາໃນການເຄື່ອນໄຫວອື່ນໆ;
- ຕ້ອງຈັດໃຫ້ມີປ້າຍຊີ້ບອກທີ່ໃຊ້ສັນຍາລັກສາກົນເພື່ອຊີ້ບອກສະຖານທີ່, ລາຍການ ແລະການບໍລິການຢູ່ສານໃຫ້ແກ່ຄົນພິການ.
- ໃຫ້ຂໍ້ມູນ ກ່ຽວກັບຂະບວນການດຳເນີນຄະດີການຄ້າມະນຸດ ໃນຫຼາຍຮູບແບບຂອງການເຂົ້າເຖິງສານ ເຊັ່ນ: ຕິວໜັງສືນູນສຳລັບຄົນພິການ, ເນື້ອໃນວີດີໂອທີ່ເປັນສຽງອະທິບາຍ ພ້ອມດ້ວຍຄຳອະທິບາຍປະກອບພາບ, ສຽງ ແລະ ອື່ນໆ;
- ມີນາຍແປພາສາມື[12] ເພື່ອອຳນວຍຄວາມສະດວກໃຫ້ຄົນພິການສາມາດມີສ່ວນຮ່ວມໃນການດຳເນີນຄະດີ;
- ສຳລັບຄົນທີ່ມີຄວາມບົກຜ່ອງທາງດ້ານສະຕິປັນຍາຕ້ອງມີຜູ້ຊ່ຽວຊານສະເພາະທາງ ເພື່ອຊັກຖາມຜູ້ຖືກເຄາະຮ້າຍໃນສານ;
- ປະສານສົມທົບກັບອົງການທີ່ກ່ຽວຂ້ອງ ເພື່ອໃຫ້ມີຄວາມເຂົ້າໃຈ ກ່ຽວກັບຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ແລະ ພະຍານທີ່ເປັນຄົນພິການ.
- ສ້າງຄວາມອາດສາມາດ ໃຫ້ແກ່ຜູ້ພິພາກສາ ແລະ ພະນັກງານຂອງສານ ເພື່ອອຳນວຍຄວາມສະດວກໃຫ້ແກ່ຄົນພິການ.

[12]ນາຍແປພາສາ ຄວນເປັນຄົນທີ່ມີຄຸນສົມບັດເໝາະສົມ, ຜູ້ທີ່ເປັນກາງ ແລະ ຖືກຍອມຮັບໂດຍສານ ແລະ ຜູ້ຖືກເຄາະຮ້າຍ. ເບິ່ງ “ຄູ່ມືການປະຕິ ບັດຢ່າງເທົ່າທຽມ” ທີ່ພັດທະນາໂດຍສານຂອງຣາຊະອານາຈັກອັງກິດ ຊຶ່ງໃຫ້ຄຳແນະນຳແກ່ຜູ້ພິພາກສາ ກ່ຽວກັບວິທີການສື່ສານຜ່ານນາຍແປພາສາ. https://www.judiciary.uk/wp-content/uploads/2021/12/Equal-Treatment-Bench-Book-December-2021-interim-update.pdf



ຕົວຢ່າງ: ສັນຍາລັກສາກົນໃນການເຂົ້າເຖິງສະຖານທີ່: ແມ່ນຖືກນຳໃຊ້ຢູ່ໃນສານ, ສະໜາມບິນ, ໂຮງໝໍ ແລະ ອື່ນໆ ເຊັ່ນ: ລູກສອນຊີ້ບອກ, ຣາວຈັບ, ບ່ອນນັ່ງສຳລັບຄົນພິການ.

ຕົວຢ່າງ: ວິດີໂອອອນລາຍທີ່ສາມາດເຂົ້າເຖິງ ສ້າງວິດີໂອໃຫ້ແກ່ຄົນທີ່ມີຄວາມບົກຜ່ອງທາງດ້ານສະຕິປັນຍາໂດຍສະແດງຕົວລະຄອນທີ່ມີຄວາມບົກຜ່ອງທາງສະຕິປັນຍາ ແລະ ຄົນພິການທາງສາຍຕາ ແລະ ອະທິບາຍຂະບວນການດຳເນີນຄະດີຂອງສານ ແລະ ມີສິ່ງໃດແດ່ທີ່ຕ້ອງການ.[13]



ການຮ່ວມມືກັບອົງການຈັດຕັ້ງທີ່ບໍ່ສັງກັດລັດ ແລະ ຜູ້ໃຫ້ບໍລິການສະເພາະດ້ານ ການຊ່ວຍເຫຼືອ ແລະ ການບໍລິການໃຫ້ຄົນພິການ ເຊັ່ນ: ທະນາຍຄວາມ, ທີ່ປຶກສາ ແລະ ອື່ນໆ ຜູ້ທີ່ມີທັກສະໃນການ

[13]https://www.youtube.com/watch?v=0WaTnsw3UWQ

ເຮັດວຽກກັບກຸ່ມທີ່ມີຄວາມສ່ຽງເຫຼົ່ານີ້ ເພື່ອແນະນຳທາງດ້ານກົດໝາຍ ແລະ ອະທິບາຍການເຂົ້າເຖິງຂະບວນຍຸຕິທຳ.

ເອກະສານທີ່ສາມາດເຂົ້າເຖິງສານ: ໂດຍການສ້າງແຜ່ນພັບຂໍ້ມູນ (Brochures) ສຳລັບຜູ້ຖືກເຄາະຮ້າຍ ແລະ ພະຍານທີ່ເປັນຄົນພິການ ເພື່ອເປັນຂໍ້ມູນທີ່ແນະນຳຄົນພິການ ກ່ຽວກັບການບໍລິການຕ່າງໆທີ່ສານໄດ້ຈັດໃຫ້ ແລະ ຂັ້ນຕອນການຂໍການຊ່ວຍເຫຼືອຈາກສານ.

ສື່ສັງຄົມອອນລາຍ ແລະ ຄົນພິການ: ບາງປະເທດໄດ້ສ້າງເອກະສານບາງຢ່າງ ທີ່ຄົນພິການສາມາດເຂົ້າເຖິງໄດ້ ລວມທັງໂພສທາງສື່ສັງຄົມຕ່າງໆ ທີ່ໃຫ້ຄຳແນະນຳກ່ຽວກັບວິທີການສ້າງຮູບພາບໃຫ້ຄົນຕາບອດ ຫຼື ຄົນທີ່ມີສາຍຕາເລືອນລາງສາມາດເຂົ້າເຖິງໄດ້.[14]

[14] https://help.twitter.com/en/using-twitter/picture-descriptions

ພາກທີ III
ການຮ່ວມມືສາກົນ ແລະ ການເກັບກຳ, ວິເຄາະ ແລະ ການເຜີຍແຜ່ຂໍ້ມູນ

I. ການຮ່ວມມືສາກົນດ້ານການຄ້າມະນຸດ

ການຮ່ວມມືສາກົນດ້ານການຄ້າມະນຸດ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ປຶ້ມຄູ່ມືການດຳເນີນຄະດີການຄ້າມະນຸດຢູ່ສານ, ສະນັ້ນ ຈະໄດ້ຍົກໃຫ້ເຫັນບາງຫຼັກການກ່ຽວກັບການຮ່ວມມືສາກົນຕາມສົນທິສັນຍາ ທີ່ຕິດພັນກັບການດຳເນີນຄະດີການຄ້າມະນຸດ ເພື່ອເປັນພື້ນຖານໃຫ້ແກ່ພະນັກງານຂອງສານ ເປັນແຫຼ່ງຂໍ້ມູນ ຫຼື ເປັນບ່ອນອີງ ໃນກໍລະນີການດຳເນີນຄະດີ ຫາກມີຄວາມຈຳເປັນຕ້ອງໄດ້ເກັບຂໍ້ມູນ, ຫຼັກຖານຈາກຕ່າງປະເທດ ທີ່ມີຊາຍແດນຕິດກັບ ສປປ ລາວ ມີຄື:

1. ການຮ່ວມມືສາກົນ ຕາມສົນທິສັນຍາຕ້ານການຄ້າມະນຸດ

ສົນທິສັນຍາ ທີ່ສຳຄັນທີ່ສຸດ ໃນການຮ່ວມມືໃນຂົງເຂດການຄ້າມະນຸດ ແມ່ນສົນທິສັນຍາຂອງສະຫະປະຊາຊາດວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ຊຶ່ງຮູ້ກັນໃນຊື່ຫຍໍ້ວ່າ: "ອະນຸສັນຍາປາເລີໂມ". ສົນທິສັນຍານີ້ໄດ້ຮັບການສະຫຼຸບໃນປີ 2000 ເປັນຂໍ້ຕົກລົງເສີມສຳລັບສົນທິສັນຍາຂອງສະຫະປະຊາຊາດ ວ່າດ້ວຍອົງການອາຊະຍາກຳຂ້າມຊາດ, ເນື້ອໃນຂອງສົນທິສັນຍາໄດ້ກຳນົດລະອຽດ ບັນດາຂັ້ນຕອນຂອງການຈັດຕັ້ງປະຕິບັດຈາກບັນດາລັດຕ່າງໆ ໃນການຮ່ວມມືຕ້ານ, ສະກັດກັ້ນ, ການປ້ອງກັນ, ການຕອບໂຕ້ການຄ້າມະນຸດ, ການສະໜອງຂໍ້ມູນ ແລະ ຫຼັກຖານດ້ານອາຊະຍາກຳໃຫ້ແກ່ກັນ ລວມໄປເຖິງການຄ້າມະນຸດທີ່ເປັນການກະທຳຜິດທາງອາຍາ[15].

ນອກຈາກນີ້, ໃນວັນທີ 21 ພະຈິກ 2015 ບັນດາລັດສະມາຊິກຂອງສະມາຄົມບັນດາຊາດອາຊີຕາເວັນອອກສ່ຽງໃຕ້ ໄດ້ລົງນາມໃນສົນທິສັນຍາ ວ່າດ້ວຍການໃຫ້ຄວາມຊ່ວຍເຫຼືອຊຶ່ງກັນ ກ່ຽວກັບການສະກັດກັ້ນ, ຕ້ານການຄ້າມະນຸດ ໂດຍສະເພາະ ແມ່ນແມ່ຍິງ ແລະ ເດັກນ້ອຍ (ASEAN Convention ACTIP) ຊຶ່ງສັນຍາດັ່ງກ່າວໄດ້ຜັນຂະຫຍາຍມາຈາກອະນຸສັນຍາປາເລີໂມ. ຊຶ່ງການໃຫ້ຄວາມຊ່ວຍເຫຼືອຊຶ່ງກັນ ແລະ ກັນທາງດ້ານການຕ້ານການຄ້າມະນຸດ ທີ່ນອນຢູ່ໃນຂອບເຂດຂອງສົນທິສັນຍາອາຊຽນ (ASEAN Convention ACTIP).

ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງດ້ານນິຕິກຳ ທີ່ລັດຕ່າງໆ ມັກຈະນຳໃຊ້ໃນການສະໜອງການຊ່ວຍເຫຼືອໃຫ້ແກ່ລັດອື່ນ ເພື່ອອຳນວຍຄວາມສະດວກໃນການດຳເນີນຄະດີ ແລະ ສືບສວນ-ສອບສວນມີ ດັ່ງນີ້:

- ການສືບຫຼັກຖານພະຍານ ຫຼື ຄຳໃຫ້ການ;
- ການກຳນົດຕົວ ແລະ ທີ່ຢູ່ຂອງພະຍານ ແລະ ຜູ້ຖືກສົງໄສ;

---

[15]ປຶ້ມຄູ່ມືການປຸກຈິດສຳນຶກຂອງອາຊຽນວ່າດ້ວຍການຄ້າມະນຸດສຳລັບຜູ້ພິພາກສາ ແລະ ໄອຍະການ (ໂຄງການທົດລອງ) ປີ 2008, ໜ້າ 13.

- ການບໍລິການເອກະສານພິຈາລະນາຄະດີ;
- ການດຳເນີນການຄົ້ນຫາ ແລະ ຍຶດຊັບສິ່ງຂອງ;
- ການກວດສອບວັດຖຸ ແລະ ສະຖານທີ່;
- ການໃຫ້ຂໍ້ມູນ, ພະຍານວັດຖຸ ແລະ ການປະເມີນຂອງຊ່ຽວຊານ;
- ການສະໜອງບົດບັນທຶກ ແລະ ເອກະສານຕົ້ນສະບັບ ຫຼື ສະບັບທີ່ຜ່ານການຢັ້ງຢືນ;
- ການກຳນົດ ຫຼື ແກະຮອຍຕິດຕາມລາຍຮັບຂອງອາຊະຍາກຳ, ການອາຍັດຊັບ ແລະ ການຍຶດລາຍຮັບຈາກອາຊະຍາກຳ;
- ການໂອນມອບນັກໂທດ ເພື່ອເປັນຫຼັກຖານ;
- ການໃຫ້ ຫຼື ການສືບຫຼັກຖານພະຍານ ໂດຍຜ່ານລະບົບເຕັກໂນໂລຊີ;
- ການບັງຄັບໃຊ້ຄຳສັ່ງຍຶດຊັບສິ່ງຂອງ ຢູ່ຕ່າງປະເທດ[16].

2. ການຮ່ວມມື ຕາມສົນທິສັນຍາສອງຝ່າຍ ຫຼື ຫຼາຍຝ່າຍ

ສປປ ລາວ ມີສົນທິສັນຍາຮ່ວມມືສອງຝ່າຍ ຫຼື ຫຼາຍຝ່າຍ ໃນການສະກັດກັ້ນ ແລະຕ້ານການຄ້າມະນຸດມີຄື:

- ສັນຍາການຮ່ວມມື ລາວ-ຫວຽດນາມ;
- ສັນຍາການຮ່ວມມື ລາວ-ຈີນ;
- ບົດບັນທຶກການຮ່ວມມື ລາວ-ໄທ.

3. ຮູບການສົ່ງຄຳຂໍການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງຂໍ້ມູນຫຼັກຖານ

ການສົ່ງຄຳຮ້ອງຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງດ້ານຂໍ້ມູນຫຼັກຖານ ແມ່ນອີງໃສ່ສົນທິສັນຍາວ່າດ້ວຍການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງກົດໝາຍໃນບັນຫາອາຊະຍາກຳລະຫວ່າງລັດສະມາຊິກອາຊຽນ ASEAN Mutual Legal Assistance Treaty (ASEAN MLAT) ໄດ້ກຳນົດຮູບແບບການສື່ສານ ລະຫວ່າງ ອົງການທີ່ມີອຳນາດເຕັມ[17]. ຊຶ່ງໂດຍທົ່ວໄປແລ້ວ ຮູບແບບການສົ່ງຄຳຮ້ອງຂໍຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງດ້ານຂໍ້ມູນ, ຫຼັກຖານ ໂດຍຜ່ານຊ່ອງທາງ ດັ່ງນີ້:

❖ **ຊ່ອງທາງການທູດ**

ຊ່ອງທາງການທູດ ແມ່ນການນຳໃຊ້ໃນກໍລະນີທີ່ບໍ່ມີຊ່ອງທາງອື່ນ, ໃນຂັ້ນຕອນນີ້ ຈະກ່ຽວຂ້ອງກັບເຈົ້າໜ້າທີ່ຂອງລັດທີ່ຮ້ອງຂໍ ຊຶ່ງເປັນຜູ້ກະກຽມຄຳຮ້ອງ ແລະ ສົ່ງເອກະສານຕໍ່ໃຫ້ກະຊວງການຕ່າງປະເທດ ຊຶ່ງເປັນຜູ້ທີ່ສົ່ງຕໍ່ຄຳຮ້ອງເຖິງຄູ່ຮ່ວມມືຢູ່ຕ່າງປະເທດ, ຈາກນັ້ນ ເຈົ້າໜ້າທີ່ການທູດຂອງລັດທີ່ຖືກຮ້ອງຂໍ ຈະສົ່ງຕໍ່ໃຫ້ອົງການໄອຍະການ ຫຼື ອົງການບັງຄັບໃຊ້ກົດໝາຍຂອງລັດ ທີ່ຖືກຮ້ອງຂໍ ຕາມຄວາມເໝາະສົມເພື່ອດຳເນີນ.

---

[16]ປຶ້ມຄູ່ມືປະຊາຄົມອາຊຽນ ວ່າການຮ່ວມມືສາກົນກ່ຽວກັບທາງດ້ານນິຕິກຳ ທີ່ຕິດພັນກັບການຄ້າມະນຸດ (TIP), ໜ້າ 61.

[17]ປຶ້ມຄູ່ມືປະຊາຄົມອາຊຽນວ່າການຮ່ວມມືສາກົນກ່ຽວກັບທາງດ້ານນິຕິກຳ ທີ່ຕິດພັນກັບການຄ້າມະນຸດ (TIP), ໜ້າ 100.

❖ ອົງການຂັ້ນສູນກາງ

ການສົ່ງຄຳຮ້ອງຂໍການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງຂໍ້ມູນຫຼັກຖານ ອົງການຂັ້ນສູນກາງ ຮັບຜິດຊອບການສົ່ງ, ການຮັບ ແລະ ການດຳເນີນຄຳຮ້ອງຂໍການຊ່ວຍເຫຼືອທັງໝົດ ໃນນາມຜູ້ຕາງໜ້າ ຂອງລັດ. ບັນດາອົງການຂັ້ນສູນກາງປະກອບມີ ກະຊວງການຕ່າງປະເທດ, ກະຊວງຍຸຕິທຳ ແລະ ອົງ ການໄອຍະການປະຊາຊົນສູງສຸດ.

ການສົ່ງຄຳຮ້ອງຜ່ານອົງການຂັ້ນສູນກາງ ມີຄວາມວ່ອງໄວກວ່າ ແລະ ປະຫຍັດເວລາຫຼາຍກວ່າ ການນຳໃຊ້ຊ່ອງທາງການທູດ ຍ້ອນວ່າອົງການຂັ້ນສູນກາງສາມາດດຳເນີນການ ກ່ຽວກັບຄຳຮ້ອງໄດ້ທັນ ທີ.

❖ **ຂັ້ນຕອນ ສຳລັບຄຳຮ້ອງຮີບດ່ວນ**

ການຊ່ວຍເຫຼືອເຊິ່ງ ແລະ ກັນ ທາງດ້ານນິຕິກຳ ຈະມີຂໍ້ກຳນົດກ່ຽວກັບຂັ້ນຕອນການຮ້ອງຂໍ ຄວາມຊ່ວຍເຫຼືອແບບຮີບດ່ວນ. ໃນກໍລະນີຮີບດ່ວນ ສາມາດເຮັດໄດ້ ທາງປາກເປົ່າ ຫຼື ຜ່ານແຟັກ ຫຼື ອີແມວ ໂດຍມີໜັງສືຢັ້ງຢືນຢ່າງເປັນລາຍລັກອັກສອນ, ກໍລະນີຮີບດ່ວນ ແມ່ນຄະດີທີ່ມີຄວາມສ່ຽງ ຮ້າຍແຮງຄື:

- ຄວາມປອດໄພ ຂອງບຸກຄົນໄດ້ຮັບຜົນກະທົບ ທີ່ຖືກຮັບຮູ້ແລ້ວ ຫຼື ມີທ່າອ່ຽງທີ່ຈະໄດ້ຮັບ ຜົນກະທົບ ຫຼື ພະຍານ ຫຼື ຄອບຄົວຂອງເຂົາເຈົ້າຈະຖືກຄຸກຄາມ;
- ຜູ້ຕ້ອງສົງໄສຈະຖືກປ່ອຍຕົວ;
- ຫຼັກຖານພະຍານສຳຄັນ ຈະຖືກສູນເສຍ ຫຼື ຖືກທຳລາຍ;
- ຄວາມສາມາດໃນການຕິດຕາມ ແລະ ການຍຶດຊັບສິ່ງຂອງຊົ່ວຄາວຈະຖືກຄຸກຄາມ.

ສິ່ງທີ່ຄວນເອົາໃຈໃສ່: ຄະດີການຄ້າມະນຸດ ແມ່ນອາຊະຍາກຳຮ້າຍແຮງທີ່ສຸດ ແລະ ຜູ້ໄດ້ຮັບ ຜົນກະທົບ, ຄວາມສ່ຽງຮ້າຍແຮງ ທີ່ເປັນການຂົ່ມຂູ່ ແລະ ການແກ້ແຄ້ນ. ສະນັ້ນ, ຄຳຮ້ອງເຫຼົ່ານັ້ນ ຄວນເປັນຄຳຮ້ອງຮີບດ່ວນ.

❖ **ເນື້ອໃນຄຳຮ້ອງຂໍຊ່ວຍເຫຼືອ**

ຄຳຮ້ອງຂໍການຊ່ວຍເຫຼືອ ຕ້ອງເຮັດເປັນລາຍລັກອັກສອນ[18] ໂດຍຜ່ານຊ່ອງທາງທີ່ໄດ້ກຳນົດ ໄວ້ໃນລະບຽບການສະເພາະ ແລະ ຄວນປະກອບມີຂໍ້ມູນໃສ່ຕາມແບບຟອມຂອງພາກສ່ວນທີ່ ກ່ຽວຂ້ອງ.

4. ຂອບເຂດການຮ່ວມມືດ້ານການດຳເນີນຄະດີ

ການຮ່ວມມືໃນການດຳເນີນຄະດີການຄ້າມະນຸດ ໂດຍພື້ນຖານ ແມ່ນໃຫ້ປະຕິບັດຕາມມາດຕາ 53 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ສະບັບປີ 2015, ມາດຕາ 271 ແລະ 272 ຂອງ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງ ປີ 2017.

[18]ໃນກໍລະນີຮີບດ່ວນ, ຄຳຮ້ອງ ອາດຈະເຮັດໃນຮູບແບບປາກເປົ່າ, ແຕ່ວ່າ ຕ້ອງສົ່ງຈົດໝາຍຢັ້ງຢືນຢ່າງເປັນລາຍລັກອັກສອນ ພາຍໃນ 5 ວັນ

5. ການປະຕິເສດການຮ່ວມມືສາກົນ

ອີງຕາມມາດຕາ 273 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດວ່າ ອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາຂອງ ສປປລາວ ອາດຈະປະຕິເສດໃນການຊ່ວຍເຫຼືອທາງດ້ານຍຸຕິທຳດັ່ງນີ້:

- ການສະເໜີຊ່ວຍເຫຼືອທາງດ້ານຍຸຕິທຳທີ່ບໍ່ສອດຄ່ອງກັບສັນຍາທີ່ ສປປ ລາວ ໄດ້ເຊັນກັບຕ່າງປະເທດ, ສົນທິ ສັນຍາສາກົນທີ່ ສປປ ລາວ ໄດ້ເຂົ້າຮ່ວມເປັນພາຄີ ແລະ ກົດໝາຍຂອງ ສປປ ລາວ;

- ການປະຕິບັດການຊ່ວຍເຫຼືອທາງດ້ານຍຸຕິທຳ ທີ່ຈະເປັນຜົນກະທົບຕໍ່ອຳນາດອະທິປະໄຕ, ຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງຊາດ ຫຼື ຜົນປະໂຫຍດອັນສຳຄັນຂອງ ສປປ ລາວ.

II. ການເກັບກຳ, ວິເຄາະ ແລະ ເຜີຍແຜ່ຂໍ້ມູນ

ການເກັບກຳ, ວິເຄາະ ແລະ ເຜີຍແຜ່ຂໍ້ມູນ ກໍເພື່ອຄວາມຄືບໜ້າໃນການຈັດຕັ້ງປະຕິບັດ, ເປັນຂໍ້ມູນ ແລະ ຕິດຕາມກວດກາປຶ້ມຄູ່ມືການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ (Victims Sensitive Courts:VSC) ຊຶ່ງສານປະຊາຊົນຕ້ອງໄດ້ເກັບກຳ, ວິເຄາະ ແລະ ເຜີຍແຜ່ຂໍ້ມູນໃນແຕ່ລະປີກ່ຽວກັບຂະບວນການດຳເນີນຄະດີການຄ້າມະນຸດ ມີການປ່ຽນແປງເປັນຕົ້ນສິດທິຂອງຜູ້ຖືກເຄາະຮ້າຍໄດ້ຮັບການປົກປ້ອງ ແລະ ບັນຫາອື່ນໆ.

ຕົວຊີ້ວັດທີ່ສຳຄັນຂອງການຄ້າມະນຸດ ທີ່ນຳສະເໜີໂດຍຄະນະສະເພາະກິດຕ້ານການຄ້າມະນຸດແຫ່ງຊາດຂອງບັນດາປະເທດອາຊຽນ		
ບົດລາຍງານພື້ນຖານ		
	ຕົວຊີ້ວັດ	ປະເພດ
1	ລາຍງານກ່ຽວກັບຈຳນວນຄະດີການຄ້າມະນຸດທີ່ໄດ້ສືບສວນ-ສອບສວນ/ໄດ້ລາຍງານໂດຍເຈົ້າໜ້າທີ່ຕຳຫຼວດໃນບົດລາຍງານປະຈຳປີ	ການຄຸ້ມຄອງຂໍ້ມູນຄະດີຄ້າມະນຸດ
2	ບົດລາຍງານຈຳນວນຄະດີການຄ້າມະນຸດທີ່ໄດ້ສົ່ງຟ້ອງ/ເລີ່ມດຳເນີນຄະດີໃນການລາຍງານປະຈຳປີ	ການຄຸ້ມຄອງຂໍ້ມູນຄະດີຄ້າມະນຸດ
3	ບົດລາຍງານຈຳນວນຄະດີການຄ້າມະນຸດທີ່ໄດ້ຍື່ນຟ້ອງ ແລະ ຄະດີທີ່ສິ້ນສຸດໃນບົດລາຍງານປະຈຳປີ	ການຄຸ້ມຄອງຂໍ້ມູນຄະດີຄ້າມະນຸດ
4	ບົດລາຍງານໄລຍະເວລາ ໂດຍສະເລ່ຍທີ່ຄະດີການຄ້າມະນຸດຖືກເກັບໄວ້ຢູ່ສານ ເພື່ອສະຫຼຸບໃນບົດລາຍງານປະຈຳປີ. ຈຳນວນນີ້ແມ່ນລວມທັງຈຳນວນມື້ຂອງແຕ່ລະຄະດີນັບຈາກມື້ທີ່ຄະດີໄດ້ຖືກເກັບໄວ້ໃນແຟ້ມຮອດມື້ທີ່ຄະດີໄດ້ສະຫຼຸບ ແລະ ຈາກນັ້ນແມ່ນໃຫ້ແຍກໂດຍຈຳນວນຄະດີທີ່ໄດ້ຖືກສະຫຼຸບ	ການຄຸ້ມຄອງຂໍ້ມູນຄະດີຄ້າມະນຸດ

5	ລາຍງານຈຳນວນຄະດີການຄ້າມະນຸດທີ່ຢູ່ໃນຂັ້ນອຸທອນໃນປົດລາຍງານປະຈຳປີ	ການຄຸ້ມຄອງຂໍ້ມູນຄະດີຄ້າມະນຸດ
6	ລາຍງານຈຳນວນຄະດີທີ່ສິ້ນສຸດແລ້ວ ເຊິ່ງມີຜົນມາຈາກການຕັດສິນຜູ້ຄ້າມະນຸດ ໃຫ້ຖືກລົງໂທດ ຫຼື ພົ້ນໂທດ	ຜົນໄດ້ຮັບ
7	ລາຍງານຈຳນວນຄະດີ ທີ່ຈຳເລີຍຖືກຕັດສິນວ່າ ມີຄວາມຜິດໃນສະຖານການຄະດີຄ້າມະນຸດ	ຜົນໄດ້ຮັບ
8	ລາຍງານຈຳນວນ ແລະ ເປີເຊັນຂອງຄະດີການຄ້າມະນຸດທີ່ໄດ້ສຳເລັດແລ້ວ ເຊິ່ງສານໄດ້ສັ່ງໃຫ້ຈ່າຍຄ່າຊົດເຊີຍແກ່ຜູ້ເຄາະຮ້າຍຈາກການຄ້າມະນຸດ/ການຊົດເຊີຍຫຼືຊົດໃຊ້/ຄ່າເສຍຫາຍ	ຜົນໄດ້ຮັບ
9	ເປີເຊັນທີ່ຄະດີການຄ້າມະນຸດທີ່ສິ້ນສຸດແລ້ວ ເຊິ່ງຜູ້ຖືກເຄາະຮ້າຍໄດ້ຮັບຄ່າຊົດເຊີຍບໍ່ວ່າ ຈາກກອງທຶນຊົດເຊີຍແຫ່ງຊາດ ຫຼື ຊົດໃຊ້ຄ່າເສຍຫາຍຈາກຜູ້ຄ້າມະນຸດ	ຜົນໄດ້ຮັບ
10	ລາຍງານຈຳນວນ ແລະ ເປີເຊັນຂອງຄະດີການຄ້າມະນຸດທີ່ຖືກຍື່ນເວລາທີ່ຜູ້ເຄາະຮ້າຍໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ	ການສະໜັບສະໜຸນ ແລະ ຊ່ວຍເຫຼືອ
11	ລາຍງານຈຳນວນ ແລະ ເປີເຊັນຂອງຄະດີການຄ້າມະນຸດທີ່ຖືກຍື່ນຟ້ອງ ທີ່ຜູ້ຖືກເຄາະຮ້າຍສາມາດໃຫ້ຄຳໃຫ້ການຜ່ານທາງວີດີໂອລ່ວງໜ້າກ່ອນການປະຊຸມສານ	ການສະໜັບສະໜຸນ ແລະ ການຊ່ວຍເຫຼືອ
12	ສະໜອງຂໍ້ມູນການດຳເນີນການທາງເອກະສານ ເພື່ອໃຫ້ໄດ້ຮັບ ແລະ ດຳເນີນການຮ້ອງຟ້ອງ ທີ່ຕິດພັນກັບການຮັບມືຄະດີການຄ້າມະນຸດ ທີ່ສາມາດເປີດເຜີຍໄດ້	ການຮ້ອງຟ້ອງ
13	ລາຍງານຈຳນວນຄະດີການຄ້າມະນຸດ ໂດຍແຍກເພດຕາມລັກສະນະຄວາມແຕກຕ່າງຂອງການຄ້າມະນຸດ	ຮູບແບບການຄ້າມະນຸດ
14	ລາຍງານຈຳນວນຄະດີການຄ້າມະນຸດ ໂດຍແຍກເພດຕາມເພດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ	ສັດສ່ວນ
15	ລາຍງານຈຳນວນຄະດີການຄ້າມະນຸດ ໂດຍແຍກເພດຕາມອາຍຸຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ	ສັດສ່ວນ
16	ລາຍງານຈຳນວນຄະດີການຄ້າມະນຸດ ໂດຍແຍກເພດຕາມຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ພິການ	ສັດສ່ວນ
17	ປະເທດເຮົາໄດ້ເຮັດ ຫຼື ປະກອບສ່ວນສະໜອງໃສ່ປົດລາຍງານການຄ້າມະນຸດປະຈຳປີ ທີ່ສາມາດເປີດເຜີຍຕໍ່ສາທາລະນະໄດ້	ຄວາມໂປ່ງໃສ
18	ປົດລາຍງານການຄ້າມະນຸດປະຈຳປີ ນຳສະເໜີຂໍ້ມູນແນວໂນ້ມໃນ	ຄວາມໂປ່ງໃສ

	ໄລຍະ 3-5 ປີ ກ່ຽວກັບຊຸດຂໍ້ມູນຫຼັກຂອງການຄ້າມະນຸດ	
19	ປົດລາຍງານການຄ້າມະນຸດປະຈຳປີ ທີ່ນຳສະເໜີກິດຈະກຳ/ກອງປະຊຸມໃນການຕ້ານການຄ້າມະນຸດ ລະຫວ່າງລັດຖະບານ ແລະ ຄູ່ຮ່ວມງານທີ່ບໍ່ຂຶ້ນລັດຖະບານໃນລະດັບປະເທດ ລວມທັງຄູ່ຮ່ວມງານໃນພາກພື້ນ	ຄວາມໂປ່ງໃສ
20	ເຈັບໄຊ້ການບໍລິການຂໍ້ມູນໃນຮູບແບບປະຕູດຽວ ຕໍ່ກັບການສະໜັບສະໜູນ ແລະ ການບໍລິການການຊ່ວຍເຫຼືອໃນການຄ້າມະນຸດ ແມ່ນສາມາດເປີດເຜີຍໄດ້ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຢ່າງກວ້າງຂວາງ	ຄວາມໂປ່ງໃສ
21	ລາຍງານຈຳນວນ ແລະ ເປີເຊັນຂອງການຕັດສິນຄະດີຂອງສານ ກ່ຽວກັບຄະດີການຄ້າມະນຸດ ໂດຍບໍ່ລະບຸຊື່ ແລະ ລົງແຈ້ງທາງສື່ອອນໄລ໌	ຄວາມໂປ່ງໃສ

ເອກະສານອ້າງອີງ

1. ກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2017;
2. ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2017;
3. ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012;
4. ກົດໝາຍວ່າດ້ວຍການດຳເນີນຄະດີເດັກ ສະບັບປັບປຸງ ປີ 2013;
5. ປະມວນກົດໝາຍອາຍາ;
6. ປະມວນກົດໝາຍແພ່ງ;
7. ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ສະບັບປີ 2015;
8. ກົດໝາຍວ່າດ້ວຍຜູ້ພິພາກສາ;
9. ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ປີ 2006;
10. ກົດໝາຍວ່າດ້ວຍຄົນພິການ ສະບັບປີ 2018;
11. ປຶ້ມຄູ່ມື ສຳລັບປະເທດສະມາຊິກອາຊຽນ ກ່ຽວກັບການດຳເນີນຄະດີການຄ້າມະນຸດຢູ່ສານ ທີ່ຕ້ອງຄຳນຶງເຖິງຜູ້ຖືກເຄາະຮ້າຍ;
12. ບົດບັນທຶກຮ່ວມ 4 ພາກສ່ວນ ກ່ຽວກັບການດຳເນີນຄະດີຕາມຂະບວນຍຸຕິທຳ ຄັ້ງທີ IV, ສະບັບລົງວັນທີ 15 ກໍລະກົດ 2021;
13. ປຶ້ມຄູ່ມືແນະນຳ ວິທີການນຳໃຊ້ກົດໝາຍວ່າດ້ວຍການດຳເນີນຄະດີເດັກ ສະບັບປີ 2016;
14. ປຶ້ມຄູ່ມືປະຊາຄົມອາຊຽນວ່າດ້ວຍ ການຮ່ວມມືສາກົນກ່ຽວກັບທາງດ້ານນິຕິກຳທີ່ຕິດພັນກັບການຄ້າມະນຸດ (TIP);
15. ຄູ່ມືແນະນຳຂອງອົງການ UNICEF ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນເດັກ;
16. ຫຼັກສູດຝຶກອົບຮົມ ສຳລັບພະນັກງານໄອຍະການ ແລະ ຜູ້ພິພາກສາກ່ຽວກັບການສັ່ງຟ້ອງ ແລະ ການພິຈາລະນາຄະດີການຊຸດຮີດທາງເພດເດັກ;
17. ປຶ້ມຄູ່ມືການດຳເນີນຄະດີການຄ້າມະນຸດຢູ່ສານ ໂດຍການຮ່ວມມືລະຫວ່າງ ສານປະຊາຊົນສູງສຸດ ແລະ ແຜນງານອິດສະຕຣາລີ-ເອເຊຍ ວ່າດ້ວຍການຕ້ານການຄ້າມະນຸດ ປີ 2017.

❖ **ເອກກະສານຊ້ອນທ້າຍ**



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ ນະຄອນຫຼວງວຽງຈັນ
ຄະນະສານອາຍາ ຂັ້ນຕົ້ນ ເລກທີ ...../ຂຕ.ອ
ລົງວັນທີ.....

ຄຳຕັດສິນ

ຄະນະສານອາຍາ ຂອງສານປະຊາຊົນນະຄອນຫຼວງວຽງຈັນ ປະກອບດ້ວຍ:

ທ່ານ ..... ປະທານ
ທ່ານ ..... ຄະນະ
ທ່ານ..... ຄະນະ
ນັ່ງພ້ອມດ້ວຍ ທ່ານ ..... ຈ່າສານ

ຊ້ອງໜ້າ ທ່ານ.....ຜູ້ຕາງໜ້າຫ້ອໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ.

ໄດ້ເປີດປະຊຸມສານຂຶ້ນໃນວັນທີ 02 ກໍລະກົດ 2020, ເວລາ 10 ໂມງ, ຕອນ ເຊົ້າ, ຢູ່ທີ່ຫ້ອງປະຊຸມສານ ຂອງສານປະຊາຊົນນະຄອນຫຼວງວຽງຈັນ, ເພື່ອພິຈາລະນາຄະດີອາຍາ ເລກທີ 308/ຂຕ.ອ, ລົງວັນທີ 06 ມິນາ 2020.

ລະຫວ່າງ

ຫ້ອໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ.....ໂຈດ;

ນາງ ຂ, ອາຍຸ 16 ປີ, ເຊື້ອຊາດ ແລະ ສັນຊາດ ລາວ, ອາຊີບ ນັກຮຽນ, ປັດຈຸບັນຢູ່ບ້ານ..... ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ.....ຜູ້ຖືກເຄາະຮ້າຍ;

ທ້າວ ງ, ອາຍຸ 55 ປີ, ເຊື້ອຊາດ ແລະ ສັນຊາດ ລາວ, ອາຊີບກຳມະກອນ, ປັດຈຸບັນຢູ່ບ້ານ..., ເມືອງ ...., ນະຄອນຫຼວງວຽງຈັນ .....ຜູ້ປົກຄອງຂອງຜູ້ຖືກເຄາະຮ້າຍ;

ທ້າວ ກ, ອາຍຸ 28 ປີ, ເຊື້ອຊາດ ແລະ ສັນຊາດ ລາວ, ອາຊີບ ກຳມະກອນ, ປັດຈຸບັນຢູ່ບ້ານ ....., ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.....ຈຳເລີຍ.

ຖືກຫາວ່າ: ການຄ້າມະນຸດ

ຖືກກັກຕົວ: ວັນທີ 03 ສິງຫາ 2019.

ສະຖານທີ່ກັກຂັງ: ຄ້າຍຄຸຂັງ ຊົ່ວຄາວຫ້ອງຕຳຫຼວດນະຄອນບານ.

ສານ

ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ອີງຕາມສິດ ແລະ ໜ້າທີ່ຂອງສານຕາມກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງປີ 2017;

ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2017;

ໄດ້ແຈ້ງຄະດີທີ່ນຳອອກມາພິຈາລະນາໃຫ້ ໂຈດ, ຜູ້ຖືກເຄາະຮ້າຍ/ທະນາຍຄວາມ ແລະ ຈຳເລີຍ ຊາບແລ້ວ;

ໄດ້ແຈ້ງລາຍຊື່ ແລະ ນາມສະກຸນຂອງຄະນະສານ, ຈ່າສານ, ຜູ້ຕາງໜ້າຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ ໃຫ້ໂຈດ, ຜູ້ຖືກເຄາະຮ້າຍ/ຜູ້ປົກຄອງ ແລະ ຈຳເລີຍ ຊາບແລ້ວ;

ໄດ້ແຈ້ງສິດໃນການຄ້ານຕ້ານຄະນະສານ, ຈ່າສານ, ຜູ້ຕາງໜ້າຫົວໜ້າອົງການໄອຍະການປະຊາຊົນ ນະຄອນ ຫຼວງວຽງຈັນໃຫ້ ໂຈດ, ຜູ້ຖືກເຄາະຮ້າຍ/ຜູ້ປົກຄອງ ແລະ ຈຳເລີຍ ຊາບແລ້ວ;

ໄດ້ແຈ້ງສິດໃນການຕໍ່ສູ້ຄະດີໃຫ້ໂຈດ, ຜູ້ຖືກເຄາະຮ້າຍ/ຜູ້ປົກຄອງ ແລະ ຈຳເລີຍ ຊາບແລ້ວ;

ໄດ້ຟັງຄຳສັ່ງຟ້ອງຂອງຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ ແລ້ວ;

ໄດ້ຟັງຄຳໃຫ້ການຂອງໂຈດ, ຜູ້ຖືກເຄາະຮ້າຍ/ຜູ້ປົກຄອງ ແລະ ຈຳເລີຍ ແລ້ວ;

ໄດ້ຟັງຄຳຖະແຫຼງຂອງຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ ແລ້ວ;

ໄດ້ຟັງຄຳໃຫ້ການເທື່ອສຸດທ້າຍຂອງ ຈຳເລີຍ ແລ້ວ.

ເນື້ອຄະດີ

ເຫັນຕາມ ຄຳຖະແຫຼງຂອງຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ ສະບັບ ເລກທີ 164/ອ ຍກ.ນວ, ລົງວັນທີ 04 ມັງກອນ 2020 ກ່າວວ່າ: ເລີ່ມແຕ່ ປີ 2017 ທ້າວ ກ ໄດ້ເຮັດ ວຽກຢູ່ໂຮງແຮມແຫ່ງໜຶ່ງ, ຢູ່ບ້ານ ຮ່ອງໄກ່ແກ້ວ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ໜ້າທີ່ ຮັບຜິດຊອບເປີດຫ້ອງລູກຄ້າທີ່ມາບໍລິການ ພາຍຫຼັງເປີດຫ້ອງໃຫ້ແຂກແລ້ວ ຖ້າແຂກຕ້ອງການຊື້ປະເວນີ ທ້າວ ກ ກໍໄດ້ເອົາຮູບພາບຜູ້ສາວທີ່ຕ້ອງການຈະຂາຍປະເວນີໃຫ້ເບິ່ງ, ຫຼັງຈາກນັ້ນ, ທ້າວ ກ ກໍໄດ້ກຳນົດ ລາຄາ ພາຍຫຼັງຕົກລົງລາຄາກັນໄດ້ແລ້ວ ທ້າວ ກ ກໍຈະຕິດຕໍ່ຫາຍິງສາວທີ່ຕ້ອງການຂາຍປະເວນີ ແລະ ທ້າວ ກ ໄດ້ຄ່ານາຍໜ້າຄັ້ງລະ 100.000 ກີບ (ໜຶ່ງແສນກີບ) ຫຼື 500 ບາດ (ຫ້າຮ້ອຍບາດ) ຕໍ່ຄັ້ງ. ຮອດເດືອນ ພຶດສະພາ 2019 ທ້າວ ກ ໄດ້ຮູ້ຈັກກັບ ຄ, ຢູ່ບ້ານ..., ເມືອງ ໄຊທານີ, ນະຄອນຫຼວງວຽງ ຈັນ, ທ້າວ ກ ໄດ້ແລກເປີ່ໂທກັນ ຈາກນັ້ນ ນາງ ຄ ແນະນຳໃຫ້ ທ້າວ ກ ຮູ້ຈັກກັບ ນາງ ຂ. ພໍຕົກມາຮອດ ເດືອນ ສິງຫາ 2019 ທ້າວ ກ ໄດ້ພາ ນາງ ຂ ໄປຂາຍປະ ເວນີຢູ່ໂຮງແຮມ, ຕັ້ງຢູ່ບ້ານ ຮ່ອງໄກ່ແກ້ວ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ໄດ້ຄ່າໂຕ ຈຳນວນ 1.000.000 ກີບ (ໜຶ່ງລ້ານກີບ), ທ້າວ ກ ໄດ້ແບ່ງເງິນໃຫ້ ນາງ ຂ ຈຳນວນ 500.000 (ຫ້າແສນກີບ), ວັນທີ 25 ສິງຫາ 2019 ທ້າວ ກ ໄດ້ພາ ນາງ ຂ ໄປຂາຍປະເວນີຢູ່ໂຮງແຮມ, ຢູ່ບ້ານ ໜອງໜຽງ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ໄດ້ຄ່າ ໂຕຈຳນວນ 1.000.000 ກີບ (ໜຶ່ງລ້ານກີບ), ທ້າວ ກ ໄດ້ແບ່ງເງິນໃຫ້ ນາງ ຂ ຈຳນວນ 500.000 (ຫ້າ ແສນກີບ), ຕົກມາຮອດ ວັນທີ 30 ສິງຫາ 2019 ທ້າວ ກ ໄດ້ພາ ນາງ ຂ ໄປເຮືອນພັກ ເພື່ອຈະໄປຂາຍ ປະເວນີ ໂດຍທ້າວ ກ ໄດ້ຕົກ ລົງລາຄາກັບຜູ້ທີ່ຈະມາຊື້ປະເວນີ ໃນລາຄາ 12.000 ບາດ (ສິບສອງພັນ ບາດ) ແຕ່ບໍ່ທັນໄດ້ສຳເລັດຖືກເຈົ້າໜ້າທີ່ກັກຕົວມາດຳເນີນຄະດີ.

ເຫັນຕາມເນື້ອໃນບົດບັນທຶກຄຳໃຫ້ການ ສະບັບລົງວັນທີ 30 ສິງຫາ 2019, ວັນທີ 02, 03 ກັນຍາ 2019 ແລະ ວັນທີ 25 ຕຸລາ 2019 ຂອງທ້າວ ກ (ຈຳເລີຍ) ອ້າງວ່າ: ຕົນໄດ້ເປັນພະນັກງານຢູ່ໂຮງແຮມແຫ່ງໜຶ່ງ ແຕ່ປີ 2017 ຢູ່ບ້ານ ຮ່ອງໄກ່ແກ້ວ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ໜ້າທີ່ຮັບຜິດຊອບເປີດຫ້ອງໃຫ້ລູກຄ້າທີ່ມາໃຊ້ບໍລິການຢູ່ໂຮງແຮມດັ່ງກ່າວ ຍ້ອນຕົນເຮັດວຽກຢູ່ໂຮງແຮມ ຈຶ່ງຮູ້ຈັກຍິງສາວຫຼາຍຄົນທີ່ມາໃຊ້ບໍລິການເປີດຫ້ອງຂາຍປະເວນີ ຈຶ່ງສວຍໂອກາດຂໍເບີໂທລະສັບ ແລະ ຖ່າຍຮູບຍິງສາວເຫຼົ່ານັ້ນໄວ້, ຈາກນັ້ນ ຕົນຈຶ່ງເປັນນາຍໜ້າຕິດຕໍ່ຂາຍປະເວນີຍິງສາວ ດ້ວຍການຕິດຕໍ່ຊອກຜູ້ຊື້ປະເວນີ ເພື່ອແບ່ງປັນເອົາເງິນຄ່ານາຍໜ້ານຳຍິງສາວ ທີ່ໄດ້ຈາກການຂາຍປະເວນີ, ເມື່ອມີຜູ້ຕ້ອງການຊື້ປະເວນີ ຕົນກໍຈະເອົາຮູບຖ່າຍຂອງຍິງສາວເຫຼົ່ານັ້ນ ໃຫ້ຜູ້ຊື້ປະເວນີເບິ່ງເພື່ອເລືອກແລ້ວ ຕົນກໍຈະເປັນຜູ້ກຳນົດລາຄາຂາຍປະເວນີ ເມື່ອຕົກລົງກັນໄດ້ແລ້ວ ຕົນກໍຈະໂທລະສັບຫາຍິງສາວ ທີ່ຕ້ອງການຂາຍປະເວນີ ແລ້ວນັດພົບກັນກັບຜູ້ຊື້ປະເວນີໄປເສບສົມຢູ່ເຮືອນພັກ ຫຼື ໂຮງແຮມ ແຕ່ລະຄັ້ງຕົນໄດ້ຄ່ານາຍໜ້າ ຈຳນວນ 100.000 ກີບ (ໜຶ່ງແສນກີບ) ຫຼື 500 ບາດ (ຫ້າຮ້ອຍບາດ) ຕໍ່ຄັ້ງ. ຮອດເດືອນ ພຶດສະພາ 2019 ຕົນໄດ້ຮູ້ຈັກກັບ ນາງ ຄ, ອາຍຸປະມານ 45 ປີ, ຢູ່ບ້ານ ຕານມີໄຊ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ ເອົາຜູ້ຍິງມາຂາຍປະເວນີຢູ່ໂຮງແຮມ, ຕົນ ແລະ ນາງ ຄ ກໍໄດ້ແລກເບີໂທກັນ. ປະມານເດືອນ ສິງຫາ 2019 ນາງ ຄ ໄດ້ໂທຫາຕົນວ່າ ມີເດັກນ້ອຍຕ້ອງການຂາຍປະເວນີ, ຈາກນັ້ນ ຜູ້ກ່ຽວກໍໄດ້ເອົາຮູບ ແລະ ເບີໂທ ນາງ ຂ ສົ່ງໃຫ້ຕົນ ແລະ ຕົນກໍຕິດຕໍ່ຫາ ນາງ ຂ ເພື່ອໄປຂາຍປະເວນີ ຈຳນວນ 02 ຄັ້ງຄື:

ຄັ້ງທີ 1 ບໍ່ຈື່ວັນທີ ເດືອນ ສິງຫາ 2019 ຕົນໄດ້ພາ ນາງ ຂ ໄປຂາຍປະເວນີຢູ່ໂຮງແຮມ, ຕັ້ງຢູ່ບ້ານ ຮ່ອງໄກ່ແກ້ວ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ໄດ້ຄ່າໂຕ ຈຳນວນ 1.000.000 ກີບ (ໜຶ່ງລ້ານກີບ) ຕົນໄດ້ແບ່ງໃຫ້ເງິນໃຫ້ນາງ ຂ ຈຳນວນ 500.000 (ຫ້າແສນກີບ);

ຄັ້ງທີ 2 ວັນທີ 25 ສິງຫາ 2019 ຕົນໄດ້ພາ ນາງ ຂ ໄປຂາຍປະເວນີຢູ່ໂຮງແຮມ, ຢູ່ບ້ານ ໜອງໜ້ຽວ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ໄດ້ຄ່າໂຕ ຈຳນວນ 1.000.000 ກີບ (ໜຶ່ງລ້ານກີບ), ຕົນໄດ້ແບ່ງໃຫ້ເງິນໃຫ້ ນາງ ຂ ຈຳນວນ 500.000 (ຫ້າແສນກີບ).

ຕົກມາຮອດ ວັນທີ 30 ສິງຫາ 2019 ຕົນໄດ້ພາ ນາງ ຂ ໄປຂາຍປະເວນີຢູ່ເຮືອນພັກ ໂດຍຕົນໄດ້ຕົກລົງລາຄາກັບຜູ້ທີ່ຈະມາຊື້ປະເວນີ ໃນລາຄາ 12.000 ບາດ (ສິບສອງພັນບາດ) ແຕ່ບໍ່ທັນໄດ້ສຳເລັດ ຖືກເຈົ້າໜ້າທີ່ກັກຕົວມາດຳເນີນຄະດີ.

ເຫັນຕາມ ຄຳຮ້ອງຂໍ ສະບັບລົງວັນທີ 15 ກັນຍາ 2019 ຂອງທ້າວ ງ ຜູ້ເປັນພໍ່ຂອງ ນາງ ຂ (ຜູ້ຖືກເສຍຫາຍ) ໄດ້ຮຽກຮ້ອງຄ່າປົວແປງ ກຽດສັກສີ ຈາກທ້າວ ກ (ຈຳເລີຍ) ເປັນເງິນຈຳນວນ 33.500.000 ກີບ (ສາມສິບສາມລ້ານຫ້າແສນກີບ).

ວິນິດໄສ

ເມື່ອໄດ້ຄົ້ນຄ້ວາພິຈາລະນາ ບັນດາເອກະສານຫຼັກຖານຕ່າງໆໃນສຳນວນຄະດີ ພ້ອມທັງຜົນຂອງການໄຕ່ສວນໃນທີ່ປະຊຸມສານ ຢ່າງລະອຽດຖີ່ຖ້ວນແລ້ວ.

ເຫັນວ່າ: ໃນເດືອນ ສິງຫາ 2019 ທ້າວ ກ (ຈຳເລີຍ) ໄດ້ພາ ນາງ ຂ (ຜູ້ຖືກເຄາະຮ້າຍ) ເພື່ອໄປຂາຍປະເວ ນີ ຈຳນວນ 03 ຄັ້ງ ຢູ່ໂຮງແຮມ ໂດຍໄດ້ຄ່າໂຕ ຈຳນວນ 1.000.000 ກີບ (ໜຶ່ງລ້ານກີບ) ທ້າວ ກ (ຈຳເລີຍ) ແບ່ງເງິນໃຫ້ນາງ ຂ (ຜູ້ຖືກເຄາະຮ້າຍ) ຈຳນວນ 500.000 (ຫ້າແສນກີບ); ຢູ່

ໂຮງແຮມ ໂດຍໄດ້ຄ່າໂຕຈຳນວນ 1.000.000 ກີບ (ໜຶ່ງລ້ານກີບ); ທ້າວ ກ (ຈຳເລີຍ) ໄດ້ແບ່ງໃຫ້ເງິນ ໃຫ້ ນາງ ຂ (ຜູ້ຖືກເຄາະຮ້າຍ) ຈຳນວນ 500.000 (ຫ້າແສນກີບ) ແລະ ທ້າວ ກ (ຈຳເລີຍ) ໄດ້ຕິດຕໍ່ຜູ້ທີ່ຕ້ອງການຊື້ປະເວນີ ນາງ ຂ(ຜູ້ຖືກເຄາະຮ້າຍ) ໂດຍຕົກລົງລາຄາກັບຜູ້ທີ່ຈະມາຊື້ປະເວນີ ໃນລາຄາ 12.000 ບາດ (ສິບສອງພັນບາດ) ແລ້ວນັດພົບກັນຢູ່ເຮືອນພັກ ແຕ່ບໍ່ທັນໄດ້ສຳເລັດ ຈຶ່ງຖືກເຈົ້າໜ້າທີ່ກັກຕົວມາດຳເນີນຄະດີຕາມກົດໝາຍ.

ເຫັນວ່າ: ການກະທຳຂອງ ທ້າວ ກ (ຈຳເລີຍ) ເປັນການກະທຳຜິດທາງອາຍາໃນສະຖານການຄ້າມະນຸດ ດ້ວຍວ່າ: ທ້າວ ກ (ຈຳເລີຍ) ຈົງໃຈຫາລາຍໄດ້ດ້ວຍການຄ້າມະນຸດ ດ້ວຍຮູບການຂາຍປະເພນີຂອງບຸກຄົນອື່ນ ທີ່ມີອາຍຸຕ່ຳກວ່າ ສິບແປດປີ ຢູ່ຕາມໂຮງແຮມ ແລະ ເຮືອນພັກຕ່າງໆຫຼາຍຄັ້ງ ຊຶ່ງການກະທຳດັ່ງກ່າວຂອງຈຳເລີຍ ມັນໄດ້ແຕະຕ້ອງເຖິງສິດ ແລະ ເສລີພາບຂອງບຸກຄົນອື່ນ, ຜິດຮີດຄອງປະເພນີອັນດີງາມຂອງຊາດ, ສ້າງຄວາມບໍ່ເປັນລະບຽບຮຽບຮ້ອຍໃຫ້ແກ່ສັງຄົມ, ທັງໆທີ່ຈຳເລີຍ ກໍມີສະຕິສຳປະຊັນຍະສົມບູນດີ, ມີອາຍຸກະສຽນທາງອາຍາຄົບຖ້ວນແລ້ວ, ສາມາດຮູ້ໄດ້ການກະທຳຂອງຕົນນັ້ນ ເປັນການກະທຳທີ່ຜິດຕໍ່ກົດໝາຍ ແຕ່ຈຳເລີຍ ຍັງເຈດຕະນາກະທຳລົງໄປ. ສະນັ້ນ, ຈຶ່ງຖືວ່າ ທ້າວ ກ (ຈຳເລີຍ) ໄດ້ກະທຳຜິດ ຕາມມາດຕາ 215 ວັກ 3 ຂອງປະມວນກົດໝາຍອາຍາ ປີ 2017 ທີ່ໄດ້ກຳນົດໄວ້ວ່າ: ບຸກຄົນໃດ ຫາກໄດ້ກະທຳຜິດໃນສະຖານການຄ້າປະເພນີ ເຖິງວ່າຜູ້ຖືກເຄາະຮ້າຍຈະຍິນຍອມ ຫຼື ມີຄວາມສະໝັກໃຈ ແຕ່ຖ້າຫາກຖືກນຳໃຊ້ຈຸດປະສົງໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນວັກໜຶ່ງຂອງມາດຕານີ້ ຖືວ່າເປັນການຄ້າມະນຸດ ແລະ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ, ແຕ່ການກະທ□າຜິດຂອງ ຈຳເລີຍ ໃນຄັ້ງນີ້ ເປັນການກະທຳຜິດຄັ້ງໜຶ່ງຄັ້ງດຽວ. ສະນັ້ນ, ສານຈຶ່ງເຫັນຄວນລົງໂທດຕັດອິດສະລະພາບຕ່ຳສຸດໃສ່ ທ້າວ ກ (ຈຳເລີຍ) ຄື ລົງໂທດຕັດອິດສະລະພາບ ທ້າວ ກ (ຈຳເລີຍ) ຫ້າປີ ແລະ ປັບໃໝ 10.000.000 ກີບ.

ເຫັນວ່າ: ກ່ຽວກັບຄ່າເສຍຫາຍທາງແພ່ງ ທ້າວ ງ ຜູ້ເປັນພໍ່ຂອງ ນາງ ຂ (ຜູ້ຖືກເສຍຫາຍ) ໄດ້ຮຽກຮ້ອງຄ່າປິວແປງ ກຽດສັກສີ ຈາກທ້າວ ກ (ຈຳເລີຍ) ເປັນເງິນຈຳນວນ 33.500.000 ກີບ (ສາມສິບສາມລ້ານຫ້າແສນກີບ), ເມື່ອສານພິຈາລະນາແລ້ວເຫັນວ່າ: ເປັນການຮ້ອງຂໍທີ່ມີເຫດຜົນ ແຕ່ເປັນການຮ້ອງຂໍທີ່ສູງເກີນໄປ. ສະນັ້ນ, ສານຈຶ່ງເຫັນຄວນພິຈາລະນາໃຫ້ຕາມຄວາມເໝາະສົມກ່ຽວກັບຄ່າປິວແປງ ກຽດສັກສີ ເປັນເງິນຈຳນວນ 10.500.000 ກີບ (ສິບລ້ານຫ້າແສນກີບ).

ເຫັນວ່າ: ເປົ້າໝາຍທີ່ ຈຳເລີຍ ໃຫ້ການຊັດທອດຄື: ນາງ ຄ ເຈົ້າໜ້າທີ່ບໍ່ສາມາດນຳຕົວມາດຳເນີນຄະດີໄດ້ເນື່ອງຈາກວ່າ ບໍ່ຮູ້ທີ່ຢູ່ອັນແນ່ນອນ, ຕາມບົດສະຫຼຸບຄະດີຂອງກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ສະບັບເລກທີ 2234/ປກສ.ນວ, ລົງວັນທີ 29 ຕຸລາ 2019. ສະນັ້ນ, ສານຈຶ່ງບໍ່ໄດ້ນຳມາພິຈາລະນາ.

ເຫັນວ່າ: ຈຳເລີຍ ເປັນຜູ້ກະທຳຜິດຕໍ່ກົດໝາຍອາຍາ ຈຶ່ງເຫັນຄວນໃຫ້ຮັບຜິດຊອບຄ່າທຳນຽມສານ ເຊັ່ນ: ຄ່າເສື້ອປົກສຳນວນຄະດີ ຈຳນວນ 35.000 ກີບ, ຄ່າສົ່ງໝາຍເຊີນໄອຍະການປະຊາຊົນ 1 ສະບັບ 5.000 ກີບ, ຄ່າສົ່ງໝາຍຮຽກ ຈຳນວນ 2 ສະບັບ 10.000 ກີບ, ຄ່າພິມຄຳຕັດສິນ 1 ສະບັບມີ 5 ໜ້າໆລະ 2.000 ກີບ, ເປັນເງິນຈຳນວນ 10.000 ກີບ, ຄ່າສຳເນົາຄຳຕັດສິນ 5 ສະບັບ 50.000 ກີບ

ລວມເຫັ້ງໝົດຈຳນວນ 110.000 ກີບ ຕາມມາດຕາ 28, 29, 30 ແລະ 33 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006.

ເຫັນຕາມ ມາດຕາ 215 ວັກ 3 ຂອງປະມວນກົດໝາຍອາຍາ ສະບັບປີ 2017, ມາດຕາ 28, 29, 30 ແລະ ມາດຕາ 33 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006, ມາດຕາ 207, 212, 214 ແລະ ມາດຕາ 215 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2017.

ດ້ວຍເຫດນີ້

ຈຶ່ງໄດ້ຕັດສິນຄະດີນີ້ຕໍ່ໜ້າປະຊາຊົນ ໃນສະຖານອາຍາເປັນຂັ້ນຕົ້ນ ໂດຍຊ້ອງໜ້າໂຈດ, ຜູ້ຖືກເຄາະຮ້າຍ/ຜູ້ປົກຄອງ ແລະ ຈຳເລີຍ.

ບອກວ່າ: ທ້າວ ກ (ຈຳເລີຍ) ມີຄວາມຜິດທາງອາຍາໃນສະຖານ ການຄ້າມະນຸດ.

ລົງໂທດຕັດອິດສະລະພາບ ທ້າວ ກ (ຈຳເລີຍ) ຫ້າປີ ແລະ ປັບໃໝ 10.000.000 ກີບ.

ໃຫ້ທ້າວ ກ (ຈຳເລີຍ) ທົດແທນຄ່າເສຍຫາຍທາງແພ່ງ (ຄ່າປົວແປງກຽດສັກສີ) ເປັນເງິນຈຳນວນ 10.500.000 ກີບ (ສິບລ້ານຫ້າແສນກີບ) ໃຫ້ແກ່ນາງ ຂ (ຜູ້ຖືກເຄາະຮ້າຍ).

ໃຫ້ຈຳເລີຍເສຍເງິນຄ່າທຳນຽມສານທາງອາຍາ ຈຳນວນ 110.000 ກີບ.

ໄດ້ບອກໂຈດ, ຜູ້ຖືກເຄາະຮ້າຍ/ຜູ້ປົກຄອງ ແລະ ຈຳເລີຍ ຊາບແລ້ວ ຖ້າຝ່າຍໃດບໍ່ພໍໃຈຕໍ່ຄຳຕັດສິນສະບັບນີ້ ມີສິດຂໍອຸທອນ ຫຼື ສະເໜີຄັດຄ້ານ ໄດ້ພາຍໃນກຳນົດເວລາ ຊາວວັນ, ນັບແຕ່ວັນລົງຄຳຕັດສິນນີ້ເປັນຕົ້ນໄປ.

ປະທານຄະນະສານ **ຈ່າສານ**

ສະໜັບສະໜຸນໂດຍ

Australian Aid | ASEAN-Australia Counter Trafficking